<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

Copyright © 2003 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2003

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 4-7
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-7
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-10
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 11-14
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-14
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ເພື່ອຕົວເຈົ້າເອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອາໂມດ ຂ:4-16

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ ບົດທີ 1 ແລະ ຂ

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາກໍເຫມືອນກັນກັບຄົນອິສຣາເອນສມັຍເດີມ, ຄວນເອົາໃຈໃສ່ ກ່ຽວກັບຄວາມບາບ, ຄວາມບໍ່ເປັນທັມຂອງຕົວເອງ ຫລາຍກວ່າຈະເຫັນຂອງຄົນອື່ນ.

**ຄຳຖາມເພື່ອສຳຣວດ:** ພຣະເຈົ້າມີພຣະປະສົງຢາກໃຫ້ເຮົາເນັ້ນຫນັກໃສ່ຄວາມບາບຂອງໃຜຫລາຍ ກວ່າອື່ນໃດຫມົດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໃຫ້ເຮົາເຫັນວ່າ ຄວນຈະເນັ້ນຫນັກໃສ່ຄວາມບາບຂອງຕົວເອງ ແລະ ເປັນພາກສ່ວນໃນການແກ້ໄຂຄວາມອະທັມໃນສັງຄົມ.

## ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ກ່ອນຈະເຂົ້າຫ້ອງຮຽນ ຄຣູຄວນຈະໄປຂຽນໃສ່ກະດານໄວ້ກ່ອນ: ສັນລະເສີນ, ສາລະພາບ, ຂອບພຣະຄຸນ ແລະ ເພີ້ມເຕີມ. (Adoration, Confession, Thanksgiving, Supplication) ຖາມຫ້ອງຮຽນທັງຫມົດ ວ່າ ໃນ 4 ຢ່າງນີ້ ແມ່ນຫຍັງເປັນສິ່ງທີ່ເຮັດຍາກກວ່າຫມູ່? ແລະແມ່ນຫຍັງເປັນສິ່ງທີ່ເຮັດງ່າຍກວ່າຫມູ່?

2. ເບິ່ງຄືວ່າ ຂອບພຣະຄຸນເປັນການງ່າຍ, ແຕ່ເມື່ອມາເຖິງຄຳທີ່ວ່າ ສາລະພາບ ເປັນຄຳເວົ້າງ່າຍ ແຕ່ການເຮັດການກະທຳ ແມ່ນຍາກທີ່ສຸດ. ເພາະການສາລະພາບແມ່ນ ການກະທຳທີ່ກົງກັນຂ້າມກັບສິ່ງທີ່ເຮົາກະທຳຜິດ. ຫລືບໍ່ດັ່ງນັ້ນ ເຮົາກໍອາດຈະສາລະພາບ ໃນແງ່ນຶ່ງ ແຕ່ເຮົາຊ້ຳພັດໄປເຮັດຜິດອີກແງ່ນຶ່ງ ຊຶ່ງຜິດຕໍ່ນ້ຳພຣະທັຍຂອງພຣະເຈົ້າ ແລະຜິດຕໍ່ຜູ້ອື່ນ.

3. ເອົາແຜນທີ່ໂລກອອກມາກາງໃຫ້ທຸກຄົນເຫັນ. ແລ້ວຊີ້ໄປໃສ່: ໂກລົມເບັຽ, ຊູແດນ, ອີຣັກ, ອາຟຣິກກາ, ເກົາຫລີເຫນືອ, ແລະປະເທດຈີນ. ປະເທດເຫລົ່ານີ້ມີບັນຫາເຫມືອນຢູ່ໃນອະເມຣິກາບໍ່? ປະເທດ ໂກລົມເບັຽ ມີການຂາຍຢາເສບຕິດ, ຊູແດນ ແລະ ຈີນ ມີການລະເມີດສິດທິມະນຸດ, ອີຣັກ ແລະ ເກົາຫລີເຫນືອ ມີອາວຸດຊີວະພາບທຳລາຍລ້າງຜານມະນຸດ, ອາຟຣິກກາ ມີໂຣກ ເອດ. ໃນປະເທດ ອະເມຣິກາ ເດມີບັນຫາຢ່າງນີ້ແດ່ບໍ່?
ໃນມື້ນີ້ ພວກເຮົາຈະມາສຶກສາຄຳເວົ້າຂອງ ຜູ້ພະຍາກອນ ອາໂມດ ໃນເວລາເລີ້ມທີ່ພຣະເຈົ້າຊົງຮຽກເອີ້ນ.

### ສຶກສາພຣະຄັມພີ

4. ແບ່ງຫ້ອງຮຽນອອກເປັນສາມໝວດ. ໝວດທີ ນຶ່ງ ໃຫ້ຄົ້ນຄວ້າ ອາໂມດ 1:1; 7:14 ວ່າ ທ່ານອາໂມດ ແມ່ນໃຜ? ໝວດທີ ສອງ ໃຫ້ລາຍງານວ່າ ອິສຣາເອນໃນສມັຍ ອາໂມດ ເປັນຢ່າງໃດ? ໝວດທີ ສາມ ໃຫ້ສັງເກດທ່າທີຂອງອາໂມດ ວ່າລາວຈະເຮັດຢ່າງໃດ ກ່ຽວກັບ ອິສຣາເອນ. ອ່ານໃນ ອາໂມດ ບົດ 1 ແລະ 2 ທາງທີ່ດີແລ້ວແມ່ນທຸກຄົນໃຫ້ມີພຣະຄັມພີ. ໃຫ້ເວລາ ປະມານ 5 ນາທີ

5. ໝວດທີນຶ່ງ ໃຫ້ຜູ້ຕາງໜ້າ ມາລາຍງານ. ທີ່ນັກຮຽນເກັບກຳໄດ້ ຄຣູອາດຈະຊ່ວຍບາງອັນ ຊຶ່ງເຫັນໄດ້ ຈາກເຈັ້ຽບົດຮຽນ.
ໝວດທີ ສອງ ລາຍງານກ່ຽວກັບ ອິສຣາເອນ ໃຫ້ຄຣູສອນເບິ່ງໃນເຈັ້ຽບົດຮຽນເໝືອນກັນ.
ແລະໝວດທີ ສາມ ໝວດນີ້ສຳຄັນ ວ່າອາໂມດກ່າວຢ່າງໃດ ຕໍ່ປະເທດໃກ້ຄຽງ ຫຍັບໃກ້ເຂົ້າໃກ້ເຂົ້າ ໃນທີ່ ສຸດ ລາວກໍໄດ້ກ່າວໃຫ້ອິສຣາເອນເອງ.

6. ໃຫ້ຄົນນຶ່ງອ່ານພຣະຄັມພີ ອາໂມດ 2:6-16 ແລ້ວໃຫ້ທຸກຄົນໃຫ້ຄຳຄິດຄຳເຫັນວ່າ ພຣະເຈົ້າຈະກະທຳ ຢ່າງໃດ ຕໍ່ຄົນອິສຣາເອນ ຖ້າພວກເຂົາຫາກບໍ່ຍອມຮັບຟັງພຣະຄຳຂອງພຣະອົງ.

7. ຫັນມາຫາ ພວກເຮົາ ຄຣິສຕຽນທຸກວັນນີ້ ພຣະເຈົ້າຈະກະທຳຢ່າງໃດ ຖ້າຫາກພວກເຮົາບໍ່ຟັງ ຫລືບໍ່ປະ ຕິບັດຕາມພຣະຄຳຂອງພຣະອົງ. ພວກເຮົາເປັນຄົນພິເສດ ກໍຕໍ່ເມື່ອເຮົາເຊື່ອຟັງ ແລະ ປະຕິບັດຕາມເທົ່ານັ້ນ.

8. ພຣະເຈົ້າ ສຳແດງພຣະອົງໃຫ້ຄົນອິສຣາເອນເຫັນເພື່ອພວກເຂົາຈະຢ້ານກົວ ແລະຢຳເກງພຣະອົງ.

## ຄຳແນະນຳສຳລັບວັນນີ້

9. ຄິດຄືນຫລັງ ຫາຕອນທຳອິດ ທີ່ພວກເຮົາກ່າວມາແລ້ວນັ້ນ. ສິ່ງງ່າຍທີ່ສຸດທີ່ອິສຣາເອນເຮັດໄດ້ ກໍຄືຂອບ ພຣະຄຸນພຣະເຈົ້າ ສິ່ງທີ່ພວກເຂົາທຳຍາກຫລາຍກໍຄື ສາຣະພາບ.

10. ພວກເຮົາເດ ມີຫຍັງຍາກແດ່ບໍ່ ໃນການສາຣະພາບ. ການຊີ້ມືໃສ່ຄົນອື່ນວ່າເປັນຄົນບາບ ແຕ່ຕົວເອງຍິ່ງ ບາບຫລາຍກວ່າເຂົາ ນີ້ ແມ່ນຄົນໜ້າຫວ້າຍຫລັງຫລອກບໍ່?

11. ຈົ່ງເລີກເສັ້ຽຈາກການເຫັນຄວາມຜິດຂອງຄົນອື່ນ, ຈົ່ງ ສາລະພາບບາບຂອງຕົວເອງຕໍ່ພຣະເຈົ້າ ແລ້ວ ສ້າງຊີວິດໃໝ່ ມີຄວາມສັມພັນໃໝ່ກັບພຣະເຈົ້າ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ການຕັດສິນຄວາມອະທັມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອາໂມດ 3:9-4:3; 5:10-15; 6:4-7; 8:4-6

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ 3:1--4:3; 5:1-17; 6:1-14; 8:4-14

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງທຳລາຍດ້ານເສຖກິດ ການເງິນ ຕໍ່ຜູ້ທີ່ ກົດຂີ່ຂົ່ມເຫັງຄົນທຸກ ແລະບີບເຄັ້ງ ຄົນທີ່ມີກຳລັງນ້ອຍກວ່າຕົນ.

**ຄຳຖາມເພື່ອສຳຣວດ:** ພຣະເຈົ້າຊົງເປັນຫ່ວງເປັນໃຍໃນດ້ານເສຖກິດ ການເງິນ ຫລືບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໃຫ້ເຮົາເຫັນວ່າ ການກົດຂີ່ຂົ່ມເຫັງ ແມ່ນສິ່ງທີ່ພຣະເຈົ້າ ບໍ່ຊົງພໍພຣະທັຍ ພຣະອົງຈະທຳລາຍຢ່າງແນ່ນອນ, ຈະນຳມາເປັນບົດຮຽນຢ່າງໃດ ໃນຊີວິດປະຈຳວັນປັດຈຸບັນ?

## ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ເລີ່ມຕົ້ນດ້ວຍການວາງຄຳຖາມ ພຣະເຈົ້າຊົງເປັນຫ່ວງດ້ານເສຖກິດບໍ່? ໃຫ້ຈັກສອງສາມຄົນຕອບ. ເປັນຫຍັງພຣະເຈົ້າຈຶ່ງເປັນຫ່ວງໃນດ້ານນີ້? ໃຫ້ບາງຄົນທີ່ມີຄວາມຄິດຄວາມເຫັນຕອບ.

2. ເຕືອນຫ້ອງຮຽນວ່າ ບົດນີ້ເປັນບົດທີສອງຂອງພຣະທັມອາໂມດ. ລາວໄດ້ກ່າວພຣະຄຳເພື່ອທີ່ຈະປົດປ່ອຍ ຊົນຊາດຂອງຕົນເອງ. ໃຫ້ຄົນນຶ່ງອ່ານ ຈຸດປະສົງຂອງບົດຮຽນ ໃນເຈັ້ຽບົດຮຽນຖ້າມີ ຫລືບໍ່ກໍໃຫ້ຄຣູເປັນຜູ້ ອ່ານໃຫ້ນັກຮຽນຟັງ.

3. ຕັ້ງໃຈໃສ່ໃນຂໍ້ພຣະຄັມພີ ກ່ຽວກັບປະວັດສາດຂອງອິສຣາເອນ: ສມັຍຂອງກະສັດ ເຢໂຣໂບອາມ 2 ປະເທດຊາດໄດ້ຖືກແບ່ງແຍກເປັນ ສອງຝ່າຍ. ອິສຣາເອນເປັນປະເທດທີ່ຮຸ່ງໂຣດ, ຮັ່ງມີ, ອຸດົມສົມບູນ ທຸກ ຄົນກໍໃຊ້ຟຸ່ມເຟືອຍ ຄວາມມັ່ງຄັ່ງຂອງຕົນເອງໂດຍບໍ່ຄິດເຫັນຜູ້ອື່ນເລີຍ. ໃນຄຳສັ່ງສອນຂອງອາໂມດ, ພວກ ເຮົາຈະເຫັນໄດ້ວ່າ ພວກເຂົາບໍ່ເອົາໃຈໃສ່ ແລະກໍເຮັດເປັນບໍ່ຮູ້ບໍ່ເຫັນຕໍ່ຄວາມທຸກຍາກຂອງປະຊາຊົນ.

### ນຳພາສຶກສາພຣະຄັມພີ

4. ເຊີນຫ້ອງຮຽນ ເປີດພຣະຄັມພີ ອາໂມດ 3:9-4:3. ເຕືອນທຸກຄົນໃຫ້ຕັ້ງໃຈຟັງ ແລະເກັບກຳວ່າ ການດຳ ລົງຊີວິດຂອງອິສຣາເອນເປັນຢ່າງໃດ? ຜົນທີ່ຈະໄດ້ຮັບຈະເປັນຢ່າງໃດ ຖ້າພວກເຂົາຫາກບໍ່ເອົາໃຈໃສ່. ຂຽນລົງໃນກະດານ: ການດຳລົງຊີວິດ ແລະ ຜົນທີ່ຈະຕາມມາ ເປັນລຳດັບ.

5. ອະທິບາຍ "ແມ່ງົວແຫ່ງເມືອງບາຊານ" ຄຳວ່າ "ຂໍ" ກ່ຽວເຈົ້າໄປ, ຄຳວ່າ "ກ່ຽວໄປດ້ວຍເບັດ" ໃນ

ບົດທີ 4:1-3; ໃຫ້ເບິ່ງໃນເຈັ້ຽບົດຮຽນ. ຈົ່ງຣະວັງ ຢ່າກ່າວໃສ່ຮ້າຍແດ່ຜູ້ຍິງ.

6. ນຳພານັກຮຽນເປີດໄປໃນ ບົດທີ 5:10-15 ແລະ ອ່ານໃນໃຈຂອງແຕ່ລະຄົນ. ໃຫ້ໝາຍໄວ້ວ່າ ຄົນຮັ່ງ
ເຮັດໃຫ້ຄົນທຸກຍາກມີບັນຫາຢ່າງໃດແດ່? ອະທິບາຍຄຳວ່າ "ປະຕູເມືອງ" ໂດຍອ່ານ ພຣະທັມ ຣຸດ 4:1;

7. ຄຣູຈະອ່ານ ອາໂມດ 6:4-7 ແລ້ວຊີ້ໃຫ້ເຫັນວ່າ ຍັງມີພວກທີ່ຂາດທີ່ພັກພາອາສັຍ, ພວກທີ່ນຸ່ງຜ້າຂາດ
ສ້ອຍ, ພວກທີ່ນອນຢູ່ກ້ອງສະພານ. ແຕ່ພວກເຂົາຊ້ຳພັດພາກັນເດີນເຂົ້າໄປແຕ່ງກາຍດ້ວຍເຄື່ອງປານິດ,
ບໍຣິໂພກອາຫານແບບຟູມເຟືອຍ, ອາສັຍໃນບ້ານເຮືອນຫລູຫລາ ແລະອື່ນໆ.....

8. ໃຫ້ສາມຄົນອ່ານພຣະຄັມພີ ຜູ້ທີນຶ່ງອ່ານອົພຍົບ 22:21-27; ຜູ້ທີ ສອງອ່ານສະເຫລີຍພຣະບັນຍັດ 16: 11-12;
ຜູ້ທີສາມ ອ່ານ ສະເຫລີຍພຣະບັນຍັດ 24:17-22; ເຫລືອນັ້ນທຸກຄົນໃຫ້ເບິ່ງ ອາໂມດ 8:4-6;
ຫລັງຈາກອ່ານແລ້ວ ໃຫ້ຖາມເຖິງຄວາມແຕກຕ່າງ. ນິສັຍການກະທຳເປັນຢ່າງໃດ? ການປະພຶດເປັນຢ່າງ
ໃດ? ໃຫ້ນັກຮຽນໃຫ້ຄວາມຄິດຄວາມເຫັນ.

## ຄຳແນະນຳສຳລັບວັນນີ້

9. ແມ່ນຫຍັງເກີດຂຶ້ນໃນສັງຄົມຂອງພວກເຮົາທຸກວັນນີ້? ແມ່ນຫຍັງເກີດຂຶ້ນໃນສັງຄົມອະເມຣິກາທຸກວັນນີ້?
(ບໍຣິສັດ Enron, Tyco, ImClone) ມີຫຍັງທີ່ຄ້າຍຄືກັນ? ແມ່ນການສໍ້ໂກງ ການສໍ້ຣາດບັງຫລວງ
ການກິນຫລາຍເກີນສ່ວນ, ....

10. ສະຖິຕິຄວາມທຸກຍາກໃນສະຫະຣັດອະເມຣິກາ ທີ່ໄດ້ສຳຫລວດສອງປີຜ່ານມາ ເດັກນ້ອຍ 16.1 ເປີເຊັນ,
ອາຍຸແຕ່ 18-64 ມີ 10.1 ເປີເຊັນ ຄວາມທຸກຍາກທົ່ວປະເທດມີ 32.9 ລ້ານຄົນ ໃນປີ 2001. ພວກເຮົາສາ
ມາດ ຊີ້ນິ້ວມືໃສ່ໃຜກໍໄດ້ໃນການຕິຕຽນ.

11. ຈົ່ງສແວງຫາທາງທີ່ຈະຊ່ວຍເຫລືອຄົນອື່ນ ຖ້າມີຜູ້ໃດໄດ້ຊ່ວຍແລ້ວໃຫ້ເຂົາໃຫ້ຄຳພະຍານນ້ອຍນຶ່ງ
ຈະເປັນການດີຫລາຍໃນການສະລຸບ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ການຕັດສິນຜູ້ນັບຖືສາສນາປອມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ອາໂມດ 4:4-5; 5:18-24

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ 4:4-5; 5:18-24

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງກຽດຊັງພິທີກັມຕ່າງໆ ຂອງພວກນັບຖືສາສນາປອມ, ແທນທີ່ຈະມີຄວາມພົວພັນກັນດ້ວຍສິລທັມ.

**ຄຳຖາມເພື່ອສຳຣວດ:** ການນະມັສການເປັນໜ້າທີ່ສຳຄັນຂອງຄຣິສຕະຈັກບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊີ້ໃຫ້ເຮົາເຫັນວ່າ ການນະມັສການບໍ່ແມ່ນການກະທຳເພື່ອພິທີກັມ ແຕ່ແມ່ນການກະທຳເພື່ອນະມັສການພຣະເຈົ້າ.

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຖາມພີ່ນ້ອງໃນຫ້ອງຮຽນລອງເບິ່ງດູວ່າ ການນະມັສການພຣະເຈົ້າ ອາທິດທີ່ຜ່ານມາມີຫຍັງແດ່, ໃຜຈື່ໄດ້, ອາຈານເທສນາເຣື່ອງຫຍັງ. ໃນການນະມັສການແມ່ນຫຍັງທີ່ເຮັດໃຫ້ເຮົາເຫັນໃນອານາຄົດຂ້າງໜ້າ? ເປັນຫຍັງການນະມັສການຈຶ່ງເປັນສິ່ງສຳຄັນ?

2. ເປີດໂອກາດໃຫ້ທຸກຄົນໃຫ້ຄວາມຄິດເຫັນ ແຕ່ຢ່າໃຫ້ຫລາຍຈົນເກີນໄປ. ໃຫ້ເວົ້າແຕ່ໃນທາງທີ່ດີ ຫ້າມຖົກຖຽງກັນ.

3. ບົດຮຽນໃນວັນນີ້ ພວກເຮົາຈະເຫັນການນະມັສການຂອງພວກອິສຣາເອນ. ອາໂມດກ່າວເຖິງການຕັດສິນຂອງພຣະເຈົ້າທີ່ຈະມາສູ່ ອິສຣາເອນ. ການນະມັສການຂອງພວກເຂົາເຮັດໃຫ້ພຣະເຈົ້າເຫມັນສາບ. ບໍ່ແມ່ນວ່າ ພວກເຂົາຈັດລາຍການບໍ່ຖືກ ແຕ່ເພາະພວກເຂົານະມັສການດ້ວຍນິສັຍທີ່ຜິດພາດ ນະມັສການແບບໜ້າໄຫວ້ຫລັງຫລອກ.

## ນຳພາສຶກສາພຣະຄັມພີ

4. ໃຫ້ນັກຮຽນເປີດພຣະຄັມພີ ອາໂມດ 4:4-5. ພຣະເຈົ້າເວົ້າດ້ວຍການກະທົບໃສ່ພວກອິສຣາເອນ ວ່າ ມາແມ້ ມານະມັສການ, ມາທໍຣະຍົດອີກ, ມາເຮັດຕາມໃຈຂອງເຈົ້າ ແລະມາຖວາຍຕາມໃຈສມັກ ແລ້ວກໍໂຄສະນາ. ຄຣູຈະຖາມວ່າ ມີຈັກຢ່າງທີ່ພຣະເຈົ້າໃຫ້ອິສຣາເອນມານະມັສການພຣະເຈົ້າ? ໃຫ້ເວົ້າຜູ້ລະອັນ. (ຈະມີ 4-5 ຢ່າງ)

5. ຕໍ່ໄປ ໃຫ້ນັກຮຽນອ່ານແບບງຽບໆ ອາໂມດ 5:18-20. ຖາມ : "ວັນຂອງພຣະເຈົ້າ" ມີຄວາມໝາຍຄືແນວໃດ? ໃຫ້ອີງໃສ່ໃນເຈັ້ຽບົດຮຽນ. ອິສຣາເອນຫວັງວ່າພຣະເຈົ້າຈະມາລົງໂທດຄົນອື່ນໆ, ແຕ່ພຣະເຈົ້າຊົງກ່າວຕາມຄວາມຈິງວ່າ ພຣະເຈົ້າຈະມາຕັດສິນຕາມຄວາມເປັນຈິງຂອງການກະທຳທຸກຄົນ.

6. ໃຫ້ນັກຮຽນອ່ານຜູ້ລະແຖວ ແຕ່ລະແຖວໃຫ້ຢຸດ. ພຣະເຈົ້າປະຕິເສດການນະມັສການຂອງອິສຣາເອນມີອັນໃດແດ່? ຄົນອິສຣາເອນສລອງວັນເທສການຢ່າງໃດ? ຄົນອິສຣາເອນຖວາຍເພງຢ່າງໃດ? ໃຫ້ຕອບແລະອະທິບາຍໄປດ້ວຍ, ຖ້າສົມທຽບກັບພວກເຮົາເດເປັນຢ່າງໃດ?

7. ອ່ານຂໍ້ທີ 24 ພວກເຮົາຈະເຫັນພຣະປະສົງຂອງພຣະເຈົ້າ ວ່າພຣະອົງປະສົງຢ່າງໃດ. ພຣະອົງຕ້ອງການຄວາມຍຸດຕິທັມ, ຄວາມຊອບທັມຫລາຍກວ່າສິ່ງອື່ນໃດ. ຈຳໄດ້ບໍ່ໃນສອງບົດຮຽນຜ່ານມາ ອິສຣາເອນ ເຫັນແຕ່ຄວາມຊອບທັມຂອງຕົວເອງ ຫລຽວບໍ່ເຫັນຜູ້ທີ່ທຸກຍາກ. ພວກເຂົາບໍ່ໄດ້ນະມັສການພຣະເຈົ້າ, ພວກເຂົາຖືການນະມັສການພຣະເຈົ້າເປັນຂອງບໍ່ສຳຄັນ.

8. ຄຣູຈະອະທິບາຍເພີ້ມເຕີມອີກ: ຖືການນະມັສການເປັນບ່ອນຊຸມນຸມເພື່ອຂາຍຂອງ, ຖືບ່ອນນະມັສການເປັນບ່ອນໃສ່ເຄື່ອງເອ້ ມາອວດກັນ, ຖືການນະມັສການເປັນບ່ອນປຶກສາ ເວົ້າກັນ ລົມກັນ, ຖືວ່າການນະມັສການເປັນການເສັຽເວລາລ້າໆ......ພຣະເຈົ້າຈະບໍ່ຊົງອະພັຍເລີຍ.

## <u>ນຳໃຊ້ໃນຊີວິດປະຈຳວັນ</u>

9. ທ່ານເຄີຍໄດ້ຍິນການຈົ່ມວ່າ ກ່ຽວກັບການນະມັສການຂອງພວກເຮົາແດ່ບໍ່? ໄດ້ຍິນວ່າຢ່າງໃດ? ໃຜເປັນຜູ້ຟັງໃນການນະມັສການ? ການນະມັສການບໍ່ແມ່ນໂຮງລະຄອນ ຫລືບ່ອນໂຊເພງ.

10. ທ່ານລອງໃຫ້ຄະແນນລອງເບິ່ງວ່າ ການນະມັສການຂອງພວກເຮົາສຳຄັນຫລາຍປານໃດ?
1 2 3 4 5 6 7 8 9 10 ນຶ່ງແມ່ນຕ່ຳທີ່ສຸດ ສິບແມ່ນສູງສຸດ.
ຖ້າພຣະເຈົ້າໃຫ້ຄະແນນພວກເຮົາເດ ເພິ່ນຈະໃຫ້ທໍ່ໃດ?

11. ການນະມັສການຢ່າງໃດ ພຣະເຈົ້າຊົງພໍພຣະທັຍ?

# ບົດແນະນຳການສິດສອນ
# ບົດຮຽນທີ 4
# ຂ່າວສານຂອງພຣະເຈົ້າຖືກປະຕິເສດ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ອາໂມດ 7:7-17
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ 7:1-8:3
**ຈຸດສຳຄັນຂອງບົດຮຽນນີ້:** ກ່ອນອື່ນຫມົດແມ່ນເຊື່ອຟັງພຣະເຈົ້າ
**ຄຳຖາມເພື່ອການສຳຫລວດ:** ຈະມີຫຍັງເກີດຂຶ້ນເມື່ອສາສນາໄປພົວພັນກັບການປົກຄອງ?
**ຈຸດປະສົງຂອງບົດຮຽນນີ້** ເພື່ອແຈກແຍກໃຫ້ເຫັນການຟັງແລະການຂັບຕາມພຣະຄຳຂອງພຣະເຈົ້າໃນທ່າມກາງວັທນະທັມສມັຍນີ້.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ນຳອຸປກອນຊ່າງກໍ່ເຊັ່ນ: ສາຍເນັ່ງ ຫລືໄມ້ແທກນ້ຳທ່ຽງໄປຫ້ອງຮຽນ. ກ່ອນເລີ້ມຫ້ອງຮຽນໃຫ້ຖາມສະມາຊິກໃນຫ້ອງວ່າອຸປກອນເຫລົ່ານີ້ແມ່ນຫຍັງ, ແລະໃຊ້ເຮັດຫຍັງແດ່?

2. ນີ້ເປັນເຣື່ອງຈິງ. ໃນເມືອງໃຫຍ່ແຫ່ງນຶ່ງ ເຂົາກຳລັງສ້າງຕຶກສູງຫລັງໃຫຍ່ຂຶ້ນ ປົກຕິແລ້ວ ເຂົາກໍຈະສ້າງລິຟໄຟຟ້າຢູ່ຫນ້າຕຶກເພື່ອຄົນເຂົ້າມາໃນຕຶກຈະທຽວຂຶ້ນທຽວລົງໄດ້ສະດວກ ນອກຈາກບັນໄດທັມດາແລ້ວ. ມື້ນຶ່ງ ພະນັກງານຂອງຕຶກຫລັງນັ້ນສັງເກດເຫັນວ່າເສົາທີ່ຈະຕັ້ງໃຫ້ເປັນຄີ່ຂອງລິຟໄຟຟ້ານັ້ນຮູ້ສຶກວ່າງຽງໄປຂ້າງນຶ່ງ. ລາວເລີຍໄປຖາມຊ່າງກໍ່ຜູ້ນຶ່ງກຳລັງທຳງານຢູ່ທີ່ນັ້ນໃຫ້ມາສັງເກດເບິ່ງ. ຊ່າງສອງຄົນຈຶ່ງໄດ້ຍ່າງໄປໄກຈາກຕຶກຫລັງນັ້ນ ແລ້ວໄປຢືນຢູ່ຟາກທາງອື່ນປະມານສອງຟາກຈຶ່ງສັງເກດເຫັນວ່າເສົານັ້ນງ່ຽງອອກໄປຈາກຈຸດສູນຫລາຍອົງສາ. ຖ້າຫາກວ່າບໍ່ມີໃຜເຫັນ ເກີດຕຶກຫລັງນັ້ນສ້າງແລ້ວ ລິຟໄຟຟ້າຄົງຈະມີບັນຫາແນ່ນອນ. ຊ່າງກໍ່ປມາດແລະບໍ່ເຫັນຄວາມສຳຄັນຂອງສາຍເນັ່ງ ຊຶ່ງເປັນອຸປກອນຂອງຊ່າງກໍ່ມາໄດ້ຫລາຍສັຕວັດແລ້ວ.

3. ໃຫ້ອະທິບາຍຈາກພຣະທັມຂອງອາໂມດວ່າ ຊົນຊາດອິສຣາເອນຢູ່ໃນລະດັບໃດເປັນສິ່ງວັດແທກຕາມສາຍເນັ່ງຂອງອົງພຣະຜູ້ເປັນເຈົ້າ.

### ສຶກສາບົດຮຽນ

4. ໃຫ້ສະມາຊິກຫ້ອງຮຽນຈົດຈໍ່ໃສ່ ພຣະທັມອາໂມດ 7:1-9. ຊີ້ໃຫ້ພວກເຂົາເຫັນນິມິດສາມຢ່າງທີ່ອາໂມດໄດ້ເຫັນ ແລະການສົນທະນາລະຫວ່າງພຣະຜູ້ເປັນເຈົ້າແລະອາໂມດ. ບອກໃຫ້ພວກເຂົາຕັ້ງໃຈຟັງຂໍ້ຄວາມຂອງອາໂມດ ແລະຂໍ້ຄວາມຂອງພຣະຜູ້ເປັນເຈົ້າ.

5. ໃຫ້ຖາມສະມາຊິກຫ້ອງ, <u>ອາໂມດຕອບພຣະເຈົ້າຢ່າງໃດ ເມື່ອພຣະເຈົ້າຊົງນາບຄູ່ວ່າຈະທຳຮ້າຍຊົນຊາດອິສຣາເອນໃນຂໍ້ 8-9 ?</u> (ອາໂມດບໍ່ໄດ້ຕອບຫຍັງຫມົດ.) ໃຫ້ຖາມຕໍ່ໄປອີກວ່າ, <u>ເມື່ອລາວເຫັນນິມິດທີສາມເປັນຫຍັງລາວບໍ່ຮ້ອງຂໍຕໍ່ພຣະເຈົ້າ ຫລືວ່າລາວບໍ່ເວົ້າຫຍັງຫມົດ?</u> (ບາງທີລາວອາດຈະມີຄວາມຮູ້ສຶກວ່າຊົນຊາດອິສຣາເອນ

ບໍ່ປະຕິບັດໄດ້ຕາມມາຕຖານທີ່ພຣະເຈົ້າຊົງຕັ້ງໄວ້, ຫລືວ່າ ເມື່ອລາວໄດ້ຍິນພຣະເຈົ້າຊົງກ່າວວ່າ "ເຮົາຈະບໍ່ປ່ຽນໃຈໃນການລົງໂທດພວກເຂົາ")

6. ໃຫ້ອ່ານບົດທີ 7:10-15. ໃຫ້ສະມາຊິກຫ້ອງບົ່ງບອກວ່າ ອາມາຊິອາເປັນໃຜ. ໃຫ້ພວກເຂົາເຂົ້າໃຈວ່າ ອາມາຊິອາເປັນຜູ້ປະກາດພຣະທັມໄດ້ຮັບເງິນບຳລຸງຈາກກະສັດ ເຢໂຣໂບອາມ. ສະນັ້ນ ລາວຈຶ່ງກ່າວແຕ່ສິ່ງທີ່ຖືກຫູກະສັດເທົ່ານັ້ນ.

7. ໃຫ້ຖາມສະມາຊິກຫ້ອງວ່າ ໃນພາກປະຕິບັດແລ້ວ ສມັຍນີ້ມີຫຍັງແດ່ທີ່ເຫັນກັນວ່າຄ້າຍຄືກັນກັບໃນສມັຍຂອງເຢໂຣໂບອາມໄດ້ລ້ຽງຜູ້ປະກາດພຣະທັມໄວ້ໃນວັງຂອງຕົນ? (ບໍ່ວ່າໃຜກໍຮູ້ກັນຢູ່ແລ້ວ ຜູ້ທີ່ຖືກຈ້າງໃຫ້ເວົ້າຍອມຈະເວົ້າໃຫ້ຖືກໃຈຜູ້ຈ້າງ).

8. ນຳພາສະມາຊິກຫ້ອງໃຫ້ສັງເກດເບິ່ງຄຳເວົ້າຂອງອາມາຊິອາທີ່ລາວໄດ້ກ່າວຕໍ່ກະສັດ. ໃຫ້ຖາມພວກເຂົາວ່າ, <u>ຄຳເວົ້າປະເພດໃດທີ່ກະສັດຕ້ອງການໄດ້ຍິນ? ມີຫົວເຣື່ອງອັນໃດທີ່ອາມາຊິອາບໍ່ໄດ້ກ່າວເຖິງ?</u> (ຄວາມບາບຂອງກະສັດ, ຮ່ວມທັງການກົດຂີ່ຂົ່ມເຫງປະຊາຊົນ).

9. ຖາມສະມາຊິກຫ້ອງວ່າ, <u>ພວກທ່ານຄິດວ່າຢ່າງໃດ ກ່ຽວກັບອາໂມດມີຄວາມກ້າປາກກ້າເວົ້າຕໍ່ອາມາຊິອາ?</u> ກ່ອນຈະໃຫ້ພວກເຂົາຕອບ, ໃຫ້ອ່ານຂໍ້ 16-17. ຊີ້ບອກໃຫ້ພວກເຂົາເຫັນວ່າ ອາໂມດເປັນຄົນສາມັນທັມດາ. ເປັນຢ່າງໃດລາວຈຶ່ງມີຄວາມກ້າເວົ້າໃສ່ອາມາຊິອາ? ອ່ານຂໍ້ 15 ອີກເທື່ອນຶ່ງ. ອະນຸຍາດໃຫ້ພວກເຂົາຕອບ.

## <u>ຫມູນໃຊ້ໃນການກະທຳ</u>

10. ໃຊ້ຕົວຢ່າງຂອງ ໂທມາສ ແຮລວິສ (Thomas Helwys). ລາວເປັນແບັບຕິສໃນສມັຍແລກທີ່ມີຄວາມກ້າຫານໃນການສົ່ງເສີມນະໂຍບາຍໃຫ້ມີການແຈກແຍກລະຫວ່າງສາສນາແລະຣັຖບໍ່ໃຫ້ພົວພັນກັນ. ລາວສົ່ງຂໍ້ຄວາມໄປໃຫ້ກະສັດເຈມ ທີນຶ່ງ ຊຶ່ງເປັນຜູ້ປົກຄອງທັງສາສນາແລະພຣະເຈົ້າແຜ່ນດິນດ້ວຍ. ຂໍ້ຄວາມມີດັ່ງນີ້ວ່າ:

> ກະສັດເປັນມະນຸດບໍ່ແມ່ນພຣະເຈົ້າ, ສະນັ້ນກະສັດຈະບໍ່ມີອຳນາດເຫນືອຈິດວິນຍານຂອງປະຊາຊາດ ແລະບໍ່ມີອຳນາດ ອອກກົດຫມາຍແລະຄຳສັ່ງບັນຊາຈິດວິນຍານຂອງພວກເຂົາ, ແລະກະສັດຈະເປັນເຈົ້ານາຍຂອງຈິດວນິຍານເຫລົ່ານັ້ນບໍ່ໄດ້.

ເພາະວ່າໂທມາສໄດ້ທ້າທາຍສິດອຳນາດຂອງກະສັດ, ລາວຈຶ່ງຖືກຈຳຄຸກແລະເສັຽຊີວິດໃນລະຫວ່າງປີ 1616.

11. ໃຫ້ຖາມສະມາຊິກຫ້ອງວ່າ, <u>ອ້າງອີງຕາມປະວັດສາດແນວຄິດຂອງບັນພະບຸຣຸດຂອງແບັບຕິດຍັງຈະໃຊ້ໄດ້ບໍ່ ເມື່ອສັງເກດເບິ່ງແລ້ວ ເຣື່ອງຄວາມສັນທັມໃນທ່າມກາງຜູ້ປົກຄອງຂອງຣັຖບານຮູ້ສຶກວ່າຕົກຕ່ຳແທ້?</u> ໃຫ້ໂອກາດມີການສົນທະນາກັນ. (ຕົວຢ່າງ: ເຣື່ອງປ້າຍ "ພຣະບັນຍັດສິບປະການ" ທີ່ຫ້ອຍຢູ່ໃນສານຊຶ່ງເປັນຫ້ອງການຣັຖບານ. ທ່ານເຫັນພ້ອມບໍ່ໃຫ້ມີການອ້ອນວອນໃນນາມຂອງພຣະເຈົ້າໃນຫ້ອງຮຽນຂອງໂຮງຮຽນຫລວງ? ໃນຖານະເປັນຄຣິສຕຽນ ພວກເຮົາບາງຄັ້ງຕົກຢູ່ໃນບ້ວງແຮ້ວຊຶ່ງຜັກຄວາມເຊື່ອຂອງພວກເຮົາໃຫ້ຄົນອື່ນຮັບເອົາໂດຍໃຊ້ອຳນາດຂອງຣັຖ. ມີຫຍັງຜິດບໍ່ໃຫ້ຄຣູນຳພາໃນການອ້ອນວອນໃນຫ້ອງຮຽນຂອງ

ໂຮງຮຽນຫລວງ? ສົມບຸດວ່າ ທ່ານຍ້າຍໄປຢູ່ເມືອງສໍ່ເລັກ (Salt Lake City) ຣັຖ ຢູທາ (Utah) ແລ້ວລູກຂອງທ່ານໄປໂຮງຮຽນຫລວງ ນາຍຄຣູໃນຫ້ອງຮຽນອ່ານພຣະຄັມພີຂອງຄະນະມໍມອນ (Mormon) ແລະນຳພາການອ້ອນວອນຂອງຄະນະມໍມອນອີກດ້ວຍທ່ານຈະທຳຢ່າງໃດ? ທ່ານຍັງຈະໃຫ້ຣັຖເປັນຜູ້ບົງການເຣື່ອງການເຕີບໂຕທາງຝ່າຍຈິດວິນຍານຂອງລູກທ່ານຢູ່ບໍ? ພວກເຮົາຈະສ້າງແລະຮັກສາກຳແພງແຍກລະຫວ່າງສາສນາແລະຣັຖຢ່າງໃດ?

໑໒. ໃຫ້ຖາມສະມາຊິກຫ້ອງວ່າ, ມີທາງໃດແດ່ ທີ່ຄຣິສຕຽນຈະເຮັດເພື່ອຄວາມເປັນທັມ, ເຊື່ອຟັງຫລັກຄຳສອນຂອງພຣະຄັມພີ, ຫລີກຫນີຈາກການພົວພັນກັບຣັຖ? ຄຣິສຕຽນມີຫນ້າທີ່ຮັບຜິດຊອບຕໍ່ຣັຖຢ່າງໃດ?
ໃຫ້ໂອກາດມີການສົນທະນາກັນ. ຊີ້ໃຫ້ເຫັນຄຳສອນຂອງພຣະເຢຊູ ພຣະອົງຊົງກ່າວວ່າ ຂອງກາຍຊາໃຫ້ມອບໃຫ້ກາຍຊາ ແລະຂອງພຣະເຈົ້າໃຫ້ມອບໃຫ້ພຣະເຈົ້າ ຊຶ່ງເປັນຄຳຕັກເຕືອນວ່າໃຫ້ນັບຖືຫມົດທັງສອງສະຖາບັນ.

໑໓. ອ້າງອີງໃສ່ ບົດຮຽນຄູ່ມືຂອງນັກຮຽນໃນຫົວຂໍ້ "ພຣະເຈົ້າ (ສາສນາ) ແລະຣັຖ" ແລະຈາກ ຂໍ້ຄວາມທີ່ນຳໄປໃຊ້ປະຈຳວັນ.

## ບົດແນະນຳການສິດສອນ
## ບົດຮຽນທີ 5
## ການພິພາກສາແລະຄວາມຫວັງ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ອາໂມດ 9
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ອາໂມດ 9
**ຈຸດສຳຄັນຂອງບົດຮຽນນີ້:** ການຕັດສິນຂອງພຣະເຈົ້າຈະຕ້ອງມີຕໍ່ຄວາມບາບຢ່າງແນ່ນອນ, ໃນຂນະດຽວກັນພຣະອົງກໍຈະຊົງສ້າງໄພ່ພົນຂອງພຣະອົງຂຶ້ນໃຫມ່.
**ຄຳຖາມເພື່ອການສຳຫລວດ:** ມີຫຍັງແດ່ທີ່ພວກເຮົາສາມາດຈະເພິ່ງພາໃຫ້ພຣະເຈົ້າກະທຳ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ຂ້າພະເຈົ້າມີການຕຶກຕອງກ່ຽວກັບພຣະທັມເຣື່ອງການຕັດສິນແລະການຊົງສ້າງຂຶ້ນໃຫມ່.

### ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ກ່ອນຈະເລີ້ມຫ້ອງຮຽນ: ໃຫ້ຫາອາສາສມັກສີ່ຄົນແລ້ວ ເອົາເຈັ້ຽໜັງສືທີ່ທ່ານຂຽນໄວ້ແລ້ວໃຫ້ພວກເຂົາ. ແຕ່ລະຄົນມີຂໍ້ຄວາມຂອງຕົນ. ໃຫ້ພວກເຂົາອ່ານກ່ອນເພື່ອພວກເຂົາຈະໄດ້ຕຽມພ້ອມໃນເວລາບອກໃຫ້ພວກເຂົາອ່ານ. ຂໍ້ຄວາມຕ່າງໆຢູ່ໃນຂໍ້ທີ 8 ຂອງຄູ່ມືຜູ້ສອນນີ້.

2. ຊີ້ບອກໃຫ້ສະມາຊິກຫ້ອງຮຽນຮູ້ວ່າ ພາກທີນີ່ງ ຄືບົດທີ 1 ຫາບົດທີ 6 ແມ່ນ "ຄຳເວົ້າຂອງອາໂມດ" ລາວເປັນຜູ້ປະກາດພຣະຄັມ. ບົດທີ 7 ຫາບົດທີ 9 ພຣະເຈົ້າໄດ້ໃຫ້ລາວເຫັນນິມິດ 5 ຢ່າງ. ບົດສຸດທ້າຍ ຄືບົດທີ 9 ລາວໄດ້ມິດງຽບແລະຟັງຄຳຕັດສິນຂອງພຣະເຈົ້າ. ພຣະຜູ້ເປັນເຈົ້າຊົງເຫັນການກະທຳບາບຂອງຊົນຊາດອິສຣາເອນພຽງພໍແລ້ວ. ພຣະອົງຊົງວາງມາຕຣາການຕັດສິນລົງໂທດພວກເຂົາ.

### ສຶກສາບົດຮຽນ

3. ໜູນໃຈໃຫ້ສະມາຊິກຫ້ອງເປີດພຣະຄັມພີໄປບົດທີ 9 ຂອງພຣະທັມອາໂມດ.
ໃຫ້ໃຊ້ເຫດການທີ່ເກີດຂຶ້ນເປັນຕົວຢ່າງ:
ຖາມພວກເຂົາເບິ່ງວ່າ ພວກເຂົາຈຳໄດ້ບໍ່ໃນເດືອນຕຸລາ (10) ຂອງປີ 2002. ມີຄາຕະກອນລັກລອບຍິງຄົນທັມດາສາມັນໃນເຂດອ້ອມແອ້ມ ວໍຊິງຕັນ ດີຊີ ( Washington-area sniper saga ). CNN ສະຖານີໂທຣະທັດໄດ້ອອກຂ່າວວ່າ ຕຳຣວດໃຊ້ອຸປະກອນທຸກຢ່າງທີ່ພວກເຂົາມີເພື່ອຊອກຫາແລະນຳຈັບຄາຕະກອນຄົນນີ້. ພວກເຂົາໃຊ້ພາບຈາກດາວທຽມໃນການຄົ້ນຫາຄົນຜູ້ນີ້. ດາວທຽມດວງນັ້ນມີກ້ອງຖ່າຍຮູບ ມັນໂຄຈອນອ້ອມໂລກແລະສາມາດຖ່າຍເອົາຮູບພາບຂອງທຸກໆແຈມູມແລ້ວຂຍາຍໃຫ້ເຫັນໄດ້ຢ່າງແຈ່ມແຈ້ງ. ໃນຂນະຄາຕະກອນຄົນນັ້ນຢືນຢູ່ໃນສນາມບັສແກດບານ ແລະກຳລັງແນປືນຍິງທາງໄກໄປໃສ່ຄົນຢູ່ນັ້ນ ຮູບພາບນັ້ນໄດ້ຖືກຖ່າຍຈາກດາວທຽມແລ້ວເຈົ້າໜ້າທີ່ຕຳຣວດຈຶ່ງສາມາດນຳຫາຕົວຜູ້ຮ້າຍນັ້ນໄດ້. ໃຫ້ສັງເກດເບິ່ງຄວາມສາມາດຂອງອຸປະກອນທັນສມັຍນີ້ ແລະພຣະຜູ້ເປັນເຈົ້າຜູ້ຊົງສ້າງຈັກກະວານແຫ່ງເຫັນໄດ້ໄກປານໃດຫນໍ? ພຣະອົງຊົງຮູ້ແລະເຫັນກະທັ້ງຈິດໃຈຂອງພວກເຮົາທຸກໆຄົນທີ່ຊຸກເຊື່ອງຢູ່ໃນຮ່າງກາຍຂອງພວກເຮົາ.

4. ໃນຂະນະທີ່ທ່ານອ່ານ ພຣະທັມອາໂມດ 9:1-4 ໃຫ້ທຸກຄົນຟັງແລະສັງເກດເບິ່ງວ່າໃນພຣະທັມຕອນນີ້ ຊົນຊາດອິສຣາເອນໄປລີ້ພຣະເຈົ້າຢູ່ບ່ອນໃດ. ຫລັງຈາກອ່ານແລ້ວໃຫ້ຖາມສະມາຊິກຫ້ອງວ່າພວກເຂົາຈະຕອບວ່າຢ່າງໃດ. (ບໍ່ມີບ່ອນທີ່ຈະລີ້ພຣະເຈົ້າໄດ້ເລີຍ!)

5. ຊີ້ໃຫ້ສະມາຊິກຫ້ອງເບິ່ງ ຂໍ້ 5-8 ໄດ້ເຕືອນພວກເຮົາວ່າບໍ່ມີບ່ອນໃດເລີຍທີ່ພວກເຮົາຈະລີ້ໄດ້. ອ່ານຂໍ້ 5-8 ອີກແລະຖາມພວກເຂົາ: <u>ເປັນຫຍັງຈຶ່ງບໍ່ມີບ່ອນທີ່ຈະລີ້ພຣະເຈົ້າໄດ້?</u> (ພຣະເຈົ້າຊົງຣິດອຳນາດ, ພຣະອົງເປັນຜູ້ຊົງສ້າງ!)

6. ໃຫ້ຖາມສະມາຊິກຫ້ອງວ່າ, <u>ເປັນຫຍັງພຣະຜູ້ເປັນເຈົ້າຊົງພຣະພິໂຣດຕໍ່ຊົນຊາດອິສຣາເອນ? ພວກເຂົາເຮັດບາບປະເພດໃດພຣະອົງຊົງໂກດເຄືອງແທ້?</u> ພວກເຂົາຂົ່ມເຫງຄົນຍາກຈົນ.

7. ໃຫ້ພວກອາສາສມັກສີ່ຄົນອ່ານຂໍ້ຄວາມຂອງພວກເຂົາ.
ລະຄອນກ້ອມສະແດງຜູ້ດຽວ

<u>ຄົນຜູ້ທີ 1 (ຊົນຊາດອິສຣາເອນ):</u> ພວກເຮົາເປັນໄພ່ພົນທີ່ພຣະເຈົ້າຊົງເລືອກ (ເວົ້າດ້ວຍອາການອວດອ້າງ)

<u>ຄົນຜູ້ທີ 2:</u> ມັກນຳບໍ່ເກີບໃຫມ່ໃດ໋ນີ້? ຂ້ອຍຊື້ມາດ້ວຍເງິນລາຍໄດ້ພິເສດ.

<u>ຄົນຜູ້ທີ 1:</u> ພຣະເຈົ້າຊົງຮັກພວກເຮົາຫລາຍ ພຣະອົງຊົງນຳພວກເຮົາອອກມາຈາກປະເທດເອຢິບແລະປະທານແຜ່ນດິນອັນສວຍງາມໃຫ້ພວກເຮົາ.

<u>ຄົນຜູ້ທີ 3:</u> ແນ່ນອນຂ້ອຍໄລ່ມັນອອກຈາກເຮືອນເຊົ່າຂອງຂ້ອຍ! ມັນຕົກງານ- ພວກມັນບໍ່ຈ່າຍຄ່າເຊົ່າບ້ານນີ້ວາ.

<u>ຄົນຜູ້ທີ 1:</u> ພວກເຮົາຂັບຕາມພຣະບັນຍັດຂອງພຣະເຈົ້າຢ່າງເຄັ່ງຄັດ! ເປັນຫຍັງ ພວກເຮົາບໍ່ຮັດໃຫ້ເຄັ່ງກວ່ານີ້ອີກ! ພວກເຮົາເອົາຈິງເອົາຈັງທາງສາສນາ.

<u>ຄົນຜູ້ທີ 4:</u> ໂອ, ຂ້ອຍຮູ້ວ່າພວກເຮົາບໍ່ຕ້ອງການຫ້ອງໃຫມ່ດອກ, ແຕ່ວ່າ ຖ້າພວກເຮົາບໍ່ປ່ຽນຫ້ອງ ພວກເຮົາກໍຈະບໍ່ໄດ້ເງິນງົບປະມານຈາກຣັຖ!

8. ຊີ້ບອກໃຫ້ພວກເຂົາຕັ້ງໃຈຟັງໃນຂໍ້ 8 ຂ-15.ໃນຂະນະທີ່ທ່ານ (ຫລືຜູ້ອາສາສມັກ) ອ່ານຂໍ້ນີ້. ຫລັງຈາກອ່ານສຸດແລ້ວໃຫ້ຖາມພວກເຂົາວ່າມີຫຍັງເປັນອັນຫນ້າປລາດໃນຂໍ້ຄວາມທີ່ອ່ານມານີ້. ໃຫ້ໂອກາດພວກເຂົາຕອບ. (ພຣະຜູ້ເປັນເຈົ້າຊົງປະທານຄວາມຫວັງໃນທ່າມກາງການຕັດສິນລົງໂທດ).

9. ໃຊ້ຄຳຖາມຂໍ້ທີ 3 ຈາກຄູ່ມືຂອງສະມາຊິກຫ້ອງ ຫລືຢາກຈະຖາມເອງກໍໄດ້. <u>ພຣະຜູ້ເປັນເຈົ້າທັງເກີດພຣະພິໂຣດແລະມີຄວາມຮັກໄດ້ຢ່າງໃດ?</u>

## <u>ຫມູນໃຊ້ໃນການກະທຳ</u>

10. ໃຫ້ຂຽນຂໍ້ຄວາມດັ່ງກ່າວຢູ່ເທິງກະດານ " ພວກເຮົາບໍ່ສາມາດຈະເບິ່ງເອົາແຕ່ປະສົບການໃນອະດີດແລະປະຕິເສດສະພາບຊີວິດອັນແທ້ຈິງໃນປັດຈຸບັນ. ຢູ່ເພື່ອພຣະຄຣິດ ບໍ່ແມ່ນປະສົບການຄັ້ງດຽວໃນເມື່ອໄດ້ຮັບເຊື່ອວ່າພົ້ນແລ້ວ

ຫລັງຈາກຮັບບັບຕິສະມາແລ້ວ ຢາກຈະໃຊ້ຊີວິດຢ່າງໃດກໍຕາມໃຈຊອບ.   ຖາມວ່າ: ຂໍ້ຄວາມດັ່ງກ່າວນີ້ໄດ້ກ່າວຫຍັງຕໍ່ພວກເຈົ້າ?

11. ໃຫ້ພວກເຂົາແຍກອອກເປັນກຸ່ມສອງຫາສາມຄົນແລ້ວໃຫ້ພວກເຂົາສົນທະນາຈາກຄໍາຖາມຂໍ້ທີ 2 ຂອງຄູ່ມືສະມາຊິກຫ້ອງ. ໃຫ້ເວລາພວກເຂົາຫ້າຫາເຈັດນາທີ. ຫລັງຈາກນັ້ນໃຫ້ພວກເຂົາເລືອກເອົາຕົວແທນອອກມາເພື່ອອະທິບາຍຄວາມເຫັນໃຫ້ຄົນໃນກຸ່ມອື່ນຟັງ.

12. ໃຫ້ກຸ່ມເກົ່ານັ້ນກັບໄປສຶກສາ ຂໍ້ຄວາມຈາກ ເຣື່ອງທີ່ນໍາມາສຶກສາ ຈາກຄູ່ມືຂອງສະມາຊິກຫ້ອງ ແລ້ວນໍາມາສົນທະນາອີກ.

13. ປິດຫ້ອງຮຽນດ້ວຍການອ້ອນວອນຕາມຂໍ້ຄວາມດັ່ງກ່າວນີ້. ກ່ອນອື່ນ, ຂໍໃຫ້ພຣະຜູ້ເປັນເຈົ້າຊົງໂຜດອະພັຍບາບທີ່ເຈາະຈົງເຊິ່ງກະທໍາໄປໃນສັງຄົມອະເມຣິກາ. ຕໍ່ມາ, ໃຫ້ຂອບຄຸນພຣະເຈົ້າຊົງມີພຣະທັຍອົດກັ້ນຕໍ່ພວກເຮົາ, ແລະພຣະສັນຍາໃນການໃຫ້ອະພັຍແລະພຣະຄຸນຂອງພຣະອົງ. ທ້າຍສຸດນີ້, ຂໍໃຫ້ພຣະອົງເປີດໃຫ້ເຫັນໃນສິ່ງເຈາະຈົງທີ່ຕ້ອງເຮັດ ເພື່ອເປັນພາຊະນະຂອງພຣະເຈົ້າແຫ່ງພຣະຄຸນໃນບ່ອນທີ່ພວກເຮົາອາສັຍຢູ່ແລະບ່ອນທໍາງານ.

# ບົດແນະນຳການສິດສອນ
# ບົດຮຽນທີ 6
# ບັນຫາໃນຄອບຄົວ

---

**ຂຂໍ້ພຣະຄັມພີສຳລັບບົດຮຽນ:** ໂຮເຊອາ 1:1-9
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຮເຊອາ 1:1-9
**ຈຸດສຳຄັນຂອງບົດຮຽນນີ້:** ບໍ່ສັດຊື່ຕໍ່ພຣະເຈົ້ານຳໄປສູ່ການປະຕິເສດຂອງພຣະອົງ
**ຄຳຖາມເພື່ອການສຳຫລວດ:** ພຣະຜູ້ເປັນເຈົ້າຊົງລົງໂທດບາບບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເຣື່ອງຄວາມສັມພັນໃນຄອບຄົວຂອງໂຮເອາມີຄວາມໝາຍນຳໄປເປັນການປະກາດຂອງອົງພຣະຜູ້ເປັນເຈົ້າເຖິງການຕັດສິນຊົນຊາດອິສຣາເອນແລະມີຄວາມໝາຍນຳມາໃຊ້ໃນຊີວິດປະຈຳວັນອີກດ້ວຍ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ກ່ອນເລີ້ມຫ້ອງຮຽນໃຫ້ຂຽນຫົວເຣື່ອງຂອງບົດຮຽນໃສ່ກະດານ. ເປີດຫ້ອງຮຽນດ້ວຍການເລົ່າເຣື່ອງຂອງນາງເອມເມີລີຢູ່ໃນ ຄູ່ມືຂອງສະມາຊິກຫ້ອງ, ຫລືວ່າ ທ່ານຢາກຫາມາເອງກໍໄດ້, ແລະຫລັງຈາກນັ້ນໃຫ້ຕັ້ງຄຳຖາມສອງຂໍ້ທີ່ຢູ່ມ້ວນທ້າຍໃນເຣື່ອງຂອງນາງເອມເມີລີນັ້ນ.

2. ໃຫ້ເລົ່າເຣື່ອງສະພາບບັນຫາໃນຄອບຄົວຂອງຜູ້ປະກາດພຣະທັມໂຮເຊອາ. ໃຫ້ອ້າງອີງຕາມຫົວຂໍ້ຂອງບົດຮຽນ. ໝາຍເຫດເຣື່ອງນີ້ເປັນເຣື່ອງລາວກ່ຽວກັບຄວາມສັມພັນຂອງພຣະເຈົ້າກັບບັນຫາໃນຄອບຄົວຂອງພຣະເຈົ້າ.

### ສຶກສາບົດຮຽນ

3. ເລົ່າ "ເຣື່ອງລາວເບື້ອງຫລັງຂອງພຣະທັມ" ຢູ່ໃນ ຄູ່ມືຂອງສະມາຊິກຫ້ອງ ເພື່ອຊ່ອຍໃຫ້ພວກເຂົາເຂົ້າໃຈການເປັນມາຂອງໂຮເຊອາ.

4. ອ້າງອີງຕາມຫົວຂໍ້ທີ່ນຶ່ງ, "ພຣະຄຳຂອງພຣະເຈົ້າ (1:1)." ບອກໃຫ້ພວກເຂົາຮູ້ວ່າ ແມ່ນພຣະຜູ້ເປັນເຈົ້າຊົງມີບົດບາດອັນສຳຄັນໃນພຣະທັມໂຮເຊອາ, ບໍ່ແມ່ນໂຮເຊອາ. ຖາມຄຳຖາມດັ່ງຕໍ່ລົງໄປນີ້:
- ພວກເຮົາຟັງພຣະຄຳຂອງພຣະເຈົ້າຢ່າງໃດ?
- ພຣະຜູ້ເປັນເຈົ້າຊົງກ່າວຕໍ່ພວກເຮົາຢ່າງໃດ?

5. ອ້າງອີງຕາມຫົວຂໍ້ທີສອງ, "ເມື່ອພຣະຄຳຂອງພຣະເຈົ້າເຂົ້າຕັດຜ່າກາງການເປັນຢູ່ຂອງມະນຸດ (1:2)." ຕັ້ງຄຳຖາມ:
ແມ່ນຫຍັງເຮັດໃຫ້ໂຮເຊອາແຕ່ງງານກັບຍິງໂສເພນີ? ຕໍ່ມາໃຫ້ສະມາຊິກຜູ້ນຶ່ງອ່ານຈາກ ຂໍ້ 2 ເພື່ອພວກເຂົາຈະ

ໄດ້ຄຳຕອບ.

6. ໃຫ້ອອກຄວາມເຫັນກ່ຽວກັບນາງໂກເມເປັນຕົວແທນຂອງ ຊົນຊາດອິສຣາເອນ, ແລະໂຮເຊອາເປັນຕົວແທນຂອງ ພຣະເຈົ້າ. ຕັ້ງຄຳຖາມ: ພວກເຈົ້າຄິດວ່າຢ່າງໃດ ເປັນຫຍັງພຣະເຈົ້າຈຶ່ງເລືອກເອົາໂຮເຊອາໃຫ້ເປັນຕົວແທນຂອງ ພຣະອົງໃນເຣື່ອງລາວນີ້? (ລາວສັດຊື່ແລະລາວເຊື່ອຟັງພຣະເຈົ້າອັນເປັນທີ່ພິສູດໄດ້.) ພຣະເຈົ້າຊົງໃຊ້ຄົນໃນສມັຍ ນີ້ໃຫ້ເຮັດວຽກໃຫ້ພຣະອົງໄດ້ຢ່າງໃດ? (ເພາະວ່າພວກເຂົາເຊື່ອຟັງ). ມີທາງໃດແດ່ ທີ່ໂຮເຊອາອາດຈະຂັດຂືນໄປ ຕາມທິດທາງຂອງພຣະອົງ? ໃຫ້ສັງເກດເບິ່ງ ໂຮເຊອາມີຄວາມກ້າຫານໃນການເຊື່ອຟັງ.

7. ໃຫ້ສົມທຽບເບິ່ງລະຫວ່າງຄວາມສັມພັນຂອງໂຮເຊອາແລະນາງໂກເມ ກັບຄວາມສັມພັນຂອງພຣະເຈົ້າແລະຊົນ ຊາດອິສຣາເອນ. ຊີ້ໃຫ້ສະມາຊິກເບິ່ງ ພຣະບັນຍັດທີ່ມອບໃຫ້ແກ່ໂມຊຶ່ງຊົນຊາດອິສຣາເອນຈະຕ້ອງເຊື່ອຟັງແລະ ຂັບຕາມ, ແຕ່ວ່າພວກເຂົາກັບໄປນະມັສການພຣະອື່ນໆ.

8. ອ້າງອີງຕາມຫົວຂໍ້ທີສາມ, "ເມື່ອຄົນເຮົາກາຍເປັນເໜືອກວ່າສັນຍາລັກໃນການໃຊ້ຊີວິດ (1:2-9)." ຊື່ຂອງລູກ ໂຮເຊອາແມ່ນພຣະເຈົ້າເປັນຜູ້ໃຫ້. ພຣະເຈົ້າໃຫ້ຊື່ພວກເຂົາຕາມການເປັນມາຂອງຄອບຄົວທີ່ມີບັນຫາ.

9. ໃຫ້ເອົາເຈັ້ຽມາສາມໃບແລະແຕ່ລະໃບໃຫ້ຂຽນຊື່ຂອງລູກໂຮເຊອາໃສ່. ຕິດຊື່ຂອງລູກກົກໃສ່ຝາ. ໃຫ້ຜູ້ນຶ່ງອ່ານ ຂໍ້ 3-5 ທີ່ກ່ຽວກັບລູກຊາຍກົກ. ໃຫ້ພວກເຂົາຟັງເພື່ອສັງເກດ

- ຄວາມໝາຍຂອງຊື່ນັ້ນ
- ການຕັດສິນຊົນຊາດອິສຣາເອນຍ້ອນຄວາມບໍ່ສັດຊື່ຕໍ່ພຣະຢາໂຮວາທີ່ມີຄວາມໝາຍໃນຊື່ນັ້ນ.

(ຖ້າຕ້ອງການລາຍລະອຽດເບື້ອງຫລັງການເປັນມາຂອງຊື່ລູກກົກນັ້ນ ໃຫ້ອ່ານ ປະຫວັດກະສັດທີສອງບົດທີ 9-10).

10. ໃຫ້ເຮັດຄືກັນກັບຊື່ຂອງລູກຜູ້ທີສອງແລະຜູ້ທີສາມ. ລູກຜູ້ທີສອງຢູ່ໃນຂໍ້ 6-7. ສຳລັບລູກຜູ້ທີສາມຢູ່ໃນຂໍ້ 8-9.

## ໝູນໃຊ້ໃນການກະທຳ

11. ອ້າງອີງຕາມຫົວຂໍ້ທີສີ່, "ຂໍ້ຄວາມທີ່ນຳໄປໃຊ້ປະຈຳວັນ." ນຳພາໃນການສົນທະນາໃນຂໍ້ຄວາມດັ່ງຕໍ່ໄປນີ້:

- ທ່ານຄິດວ່າ ພຣະເຈົ້າຈະສົມທຽບເຫດການໃນສມັຍນີ້ກັບສມັຍຂອງໂຮເຊອາຢ່າງໃດ?
- ທ່ານຄິດວ່າ ຄຣິສຕະຈັກຈະອະນຸຍາດໃຫ້ມີເຫດການຢ່າງນີ້ເກີດຂຶ້ນໄປໄກປານໃດ ຄືວ່າ ຄຣິສຕະຈັກ ຈຶ່ງຮັກພັກດີຕໍ່ພຣະທຽມຂອງຊາວໂລກຊຶ່ງເປັນການກີດກັ້ນບໍ່ໃຫ້ນະມັສການພຣະເຈົ້າອົງທ່ຽງແທ້?

## ບົດແນະນຳການສິດສອນ
## ບົດຮຽນທີ 7
## ສ້າງຄວາມສັມພັນຂຶ້ນໃໝ່

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ໂຮເຊອາ 1:10-2:5,14-23; 3:1-5
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຮເຊອາ 1:10-3:5
**ຈຸດສຳຄັນຂອງບົດຮຽນນີ້:** ພຣະຜູ້ເປັນເຈົ້າຊົງສ້າງຄວາມສັມພັນຂຶ້ນໃໝ່ກັບຜູ້ທີ່ຫ່າງເຫີນຈາກພຣະອົງ
**ຄຳຖາມເພື່ອການສຳຫລວດ:** ພຣະຜູ້ເປັນເຈົ້າຊົງຕອບສນອງຕໍ່ພວກເຮົາຢ່າງໃດໃນເມື່ອພວກເຮົາເຮັດບາບ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອນຳໄປໃຫ້ເຫັນການພົວພັນລະຫວ່າງພຣະຜູ້ເປັນເຈົ້າແລະຊົນຊາດອິສຣາເອນ ຊຶ່ງໄດ້ສອນພວກເຮົາວ່າພຣະອົງມີພຣະປະສົງສ້າງຄວາມສັມພັນກັບພວກເຮົາ.

### ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຖາມສະມາຊິກຫ້ອງວ່າ: ທ່ານເຄີຍຊື້ເຮືອນເກົ່າຫລືຂອງເກົ່າແລ້ວ ສ້ອມແປງໃຫ້ມັນໃໝ່ຂຶ້ນຫລືບໍ່? ໃຫ້ພວກເຂົາເລົ່າປະສົບການຂອງພວກເຂົາໃຫ້ໝູ່ໃນຫ້ອງຟັງ.

2. ແຈ້ງໃຫ້ພວກສະມາຊິກຫ້ອງຮູ້ວ່າ ພຣະຜູ້ເປັນເຈົ້າຊົງດຳເນີນກິຈການໃນການສ້າງຄວາມສັມພັນຂຶ້ນໃໝ່. ພຣະອົງຊົງເປັນຜູ້ລິເລີ້ມຈອດຕິດຄວາມແຕກແຍກແລະເຮັດໃຫ້ດີຂຶ້ນ.

3. ໃຊ້ເຣື່ອງລາວຂອງທ່ານອາຈານຈໍເຈີ ທຣູເອດຢູ່ໃນ ຄູ່ມືຂອງສະມາຊິກຫ້ອງ ຫລືວ່າປະສົບການຂອງສ່ວນບຸກຄົນ ເພື່ອນຳພວກເຂົາໃຫ້ເຂົ້າມາຫາບົດຮຽນ.

### ສຶກສາບົດຮຽນ

4. ອ້າງອີງຕາມຫົວຂໍ້ທີນຶ່ງຈາກ ຄູ່ມືຂອງສະມາຊິກຫ້ອງ, " ພຣະເຈົ້າຜູ້ຊົງພຣະຊົນຢູ່ໄດ້ຫັນປ່ຽນຄວາມເປັນໄປໃຫ້ດີຂຶ້ນ (1:10-2:1)." ໃຫ້ຂຽນຂໍ້ຄວາມດັ່ງກ່າວຢູ່ເທິງກະດານ. ຖາມວ່າ: ພຣະເຈົ້າເຮັດຫຍັງແດ່ກ່ອນເລີ້ມສ້າງຄວາມສັມພັນຂຶ້ນໃໝ່? ຊີ້ໃຫ້ເຫັນວ່າຂໍ້ພຣະທັມຈະຊ່ອຍຕອບຄຳຖາມດັ່ງກ່າວ.

5. ເຊື້ອເຊີນໃຫ້ສະມາຊິກຫ້ອງອ່ານພຣະທັມໂຮເຊອາ 1:10-2:1 ແລະຊອກຫາຄຳຕອບໃນຄຳຖາມດັ່ງກ່າວນີ້: ຂໍ້ພຣະຄັມພີດັ່ງກ່າວນີ້ໄດ້ບອກພວກເຮົາເຖິງຄວາມສັມພັນລະຫວ່າງພຣະເຈົ້າແລະຊົນຊາດອິສຣາເອນຢ່າງໃດແດ່? (ພຣະເຈົ້າມີພຣະປະສົງຈະສ້າງຄວາມສັມພັນຂຶ້ນໃໝ່ແລະດຳເນີນກິຈການໃນທ່າມກາງພວກເຂົາເພື່ອໃຫ້ເກີດຂຶ້ນ.)

6. ອ້າງອີງຕາມຫົວຂໍ້ທີສອງ, "ຄວາມທໍຣະມານນຳໄປສູ່ຫລັກຊັຍ (2:2-5)." ໜູນໃຈໃຫ້ສະມາຊິກອ່ານພຣະທັມ

ຕ່ອນນີ້ແລະຊອກຫາຄຳຕອບຈາກຄຳຖາມດັ່ງຕໍ່ໄປນີ້: ໃນພຣະທັມຕອນນີ້ທ່ານເຫັນວ່າພຣະເຈົ້ານີ້ເປັນພຣະເຈົ້າປະເພດໃດ? ໃຫ້ພວກເຂົາຕອບຄຳຖາມທີ່ໄດ້ຖາມໄປນັ້ນ, ແລະກໍຖາມອີກວ່າ: ຊົນຊາດອິສຣາເອນຈະຕ້ອງມີເງື່ອນໄຂອັນໃດແດ່ຈຶ່ງຈະທຳຄວາມສັມພັນຂຶ້ນໃໝ່? (ພວກເຂົາຈະຕ້ອງກັບຄືນມາຫາພຣະເຈົ້າແລະສັດຊື່ຕໍ່ພຣະອົງ.)

7. ອ້າງອີງຕາມຫົວຂໍ້ທີສາມ, "ຕາເປົ່າຫລຽວບໍ່ເຫັນ (2:14-23)." ອ້າງອີງຕາມເຣື່ອງຂອງທ່ານອາຈານ ຈໍເຈີທຣູເອດອີກເທື່ອນຶ່ງ ແລະອະທິບາຍເບິ່ງວ່າລາວຈະຕ້ອງເຮັດຢ່າງໃດ ລາວຈຶ່ງຈະຕິດຕາມພຣະປະສົງຂອງພຣະເຈົ້າ? ໃຫ້ພວກເຂົາອ່ານຂໍ້ 14-23 ແລະຖາມພວກເຂົາດ້ວຍຄຳຖາມດັ່ງກ່າວນີ້: ຈະມີຫຍັງເກີດຂຶ້ນເມື່ອພຣະເຈົ້າສ້າງຄວາມສັມພັນຂຶ້ນໃໝ່ກັບປະຊາຊົນອິສຣາເອນ? ໃຫ້ພວກເຂົາຕອບ. ສລຸບຄວາມໝາຍໃນພຣະທັມຂໍ້ນີ້, ເນັ້ນໃຫ້ພວກເຂົາເຫັນວ່າ ພຣະສັນຍາແລະແຜນການທີ່ຈະສ້າງຄວາມສັມພັນຂຶ້ນໃໝ່ແລະພຣະພອນຂອງພຣະອົງຈະຕາມມາ.

8. ອ້າງອີງຕາມຫົວຂໍ້ທີສີ່, "ຄວາມຮັກທີ່ບໍ່ມີການຢຸດຢັ້ງ (3:1-2)." ອ່ານພຣະທັມສອງຂໍ້ນີ້ໃຫ້ດັງໆ. ອະທິບາຍຂໍ້ຄວາມນີ້ຈາກ ຄູ່ມືຂອງສະມາຊິກຫ້ອງ. ພິຈາຣະນາກ່ຽວກັບເຣື່ອງຄວາມຮັກຂອງພຣະເຈົ້າມີຕໍ່ພວກເຮົາ.

9. ອ້າງອີງຕາມຂໍ້ທີຫ້າ, "ໄດ້ຮັບຄວາມພົ້ນຈາກ, ໄປສູ່, ແລະເພື່ອ (3:3-5)." ອ່ານພຣະທັມຕອນນີ້ໃຫ້ດັງ. ເນັ້ນໃຫ້ເຫັນເຖິງການສ້າງຄວາມສັມພັນຂຶ້ນໃໝ່ກໍເພື່ອຮັບໃຊ້ພຣະອົງອີກຕໍ່ໄປຕາມພຣະອົງຈະປະທານໃຫ້ຫລັງຈາກມີການອົບຮົມສັ່ງສອນ. ໃຫ້ຕັ້ງຄຳຖາມ: ທ່ານໄດ້ຖືກໄຖ່ໃຫ້ພົ້ນຈາກອັນໃດ? ທ່ານໄດ້ຖືກໄຖ່ໃຫ້ພົ້ນນຳໄປສູ່ອັນໃດ? ທ່ານຖືກໄຖ່ໃຫ້ພົ້ນເພື່ອອັນໃດ? ໜູນໃຈໃຫ້ພວກເຂົາຕອບຄຳຖາມດັ່ງກ່າວນີ້.

## ໜູນໃຊ້ໃນການກະທຳ

10. ໃຊ້ຄຳຖາມໃນການນຳໄປຄິດແລະສົນທະນາເຣື່ອງລາວໃນບົດຮຽນນີ້:

- ໃຫ້ຄິດເບິ່ງວ່າ ໃນເວລາຜ່ານມາການສ້າງຄວາມສັມພັນຂຶ້ນໃໝ່ນີ້ຄຸ້ມຄ່າຫລືບໍ່? ດ້ວຍເຫດໃດ?
- ມີຄວາມສັມພັນອັນໃດແດ່ ໃນຄອບຄົວຂອງພວກເຮົາ, ເພື່ອນຝູງ, ແລະສະມາຊິກຫ້ອງທີ່ຕ້ອງການສ້າງຂຶ້ນໃໝ່? ຄວາມສັມພັນດັ່ງກ່າວນີ້ຈະສ້າງຄືນຂຶ້ນໃໝ່ໄດ້ຢ່າງໃດ?
- ພຣະເຈົ້າຈະໃຊ້ເຮົາໄດ້ຢ່າງໃດ ເພື່ອຈະຊ່ອຍໃຫ້ຄົນອື່ນຮຽນຮູ້ໃນການຄືນດີຈາກຄວາມສັມພັນກັບພຣະເຈົ້າ, ກັບຄອບຄົວ, ຫລືກັບເພື່ອນຄົນອື່ນທີ່ແຕກເຜໄປແລ້ວ?

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 8
# ພຣະເຈົ້າຊົງກ່າວໂທດຊາວອິສຣາເອັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຮເຊອາ 4:1-12; 8:1-10, 14
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຮເຊອາ 4---8
**ຈຸດສຳຄັນຂອງບົດຮຽນນີ້:** ຄວາມເຊື່ອຖືແລະປະເພນີທາງສາສນາສາມາດປ່ຽນແປງສັງຄົມ ຫລືນຳສັງຄົມໄປສູ່ຄວາມຊົ່ວຊ້າໄດ້.

**ຄຳຖາມເພື່ອການສຳຣວດ:** ພວກເຮົາຈະສະແດງຄວາມສັດຊື່ຕໍ່ພຣະເຈົ້າໄດ້ວິທີໃດໃນສມັຍນີ້?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອເບິ່ງຄວາມຄ້າຍຄືກັນລະຫວ່າງປະເພນີຂອງພວກເຮົາ ແລະຄຳກ່າວໂທດທີ່ພຣະເຈົ້າຊົງມີຕໍ່ຊາວອິສຣາເອັນ ແລະເພື່ອຈະໄດ້ຮູ້ວິທີແກ້ໄຂ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຂຽນຄຳວ່າ "ຄົນສັດຊື່" ໃສ່ຂ້າງເທິງຂອງກະດານ. ແບ່ງກະດານອອກເປັນສອງຝ່າຍ. ໃນຂ້າງຊ້າຍຂອງກະດານໃຫ້ຂຽນຊື່ບຸກຄົນທັງຫລາຍໃນພຣະຄັມພີທີ່ນັກຮຽນເຫັນວ່າເປັນຄົນສັດຊື່. ໃນຂ້າງຂວາໃຫ້ຂຽນຊື່ບຸກຄົນໃນສມັຍນີ້ທີ່ນັກຮຽນເຫັນວ່າເປັນຄົນສັດຊື່ຕໍ່ພຣະເຈົ້າ.

2. ໃຫ້ນັກຮຽນຜູ້ນຶ່ງອະທິບາຍຄຳວ່າ "ຄວາມສັດຊື່." ຕຽມຄຳຕອບຂອງທ່ານໄວ້ເພື່ອຈະແບ່ງປັນກັບພວກນັກຮຽນ. ທ່ານອາດຈະໃຊ້ຄຳຕອບຈາກວັຈນານຸກົມ (ອັງກິດ-ລາວ).

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອ້າງເຖິງຄຳຖາມເພື່ອການສຳຣວດທີ່ວ່າ: ພວກເຮົາຈະສະແດງຄວາມສັດຊື່ຕໍ່ພຣະເຈົ້າໄດ້ວິທີໃດໃນສມັຍນີ້?

4. ສລຸບພຣະທັມໂຮເຊອາ ແຕ່ບົດທີ 1 ເຖິງ ບົດທີ 3 ທີ່ໄດ້ຮຽນມາໃຫ້ນັກຮຽນຟັງໂດຍຫຍໍ້. ເວົ້າເຖິງສິ່ງທີ່ຈະໄດ້ຮຽນໃນບົດທີ 4 ແລະບົດຕໍ່ໆໄປ.

5. ເຕືອນນັກຮຽນວ່າຊົນຊາດອິສຣາເອັນບໍ່ໄດ້ສັດຊື່ຕໍ່ພຣະຜູ້ເປັນເຈົ້າ. ຊັກຊວນນັກຮຽນໃຫ້ປຽບທຽບບົດຮຽນທີ່ຈະຮຽນໃນຕອນນີ້ໃສ່ກັບສະພາບຂອງຄຣິສຕະຈັກໃນປັດຈຸບັນ.

6. ຄຳຖາມສຳລັບນັກຮຽນ: ທ່ານຕ້ອງການຢາກໄດ້ຍິນຄຳຕໍ່ວ່າຂອງຄົນອື່ນບໍ່? ຖ້າຄຳຕໍ່ວ່ານັ້ນແມ່ນຄວາມຈິງເດ? ບອກນັກຮຽນວ່າພວກເຂົາເຈົ້າຈະໄດ້ເຫັນຄຳກ່າວໂທດຂອງພຣະເຈົ້າຕໍ່ຄົນອິສຣາເອັນໃນບົດຮຽນນີ້.

7. ຕຽມເຈ້ຍໄວ້ລ່ວງໜ້າເພື່ອຈະຢາຍໃຫ້ນັກຮຽນ. ໃນແຜ່ນເຈ້ຍນັ້ນໃຫ້ຂຽນໃສ່ວ່າ "ຄະດີຂອງຊົນຊາດອິສຣາເອັນ." ໃຫ້ຂຽນຫົວຂໍ້ 4 ຢ່າງນີ້ໃສ່: ຄະດີຂໍ້ທີນຶ່ງ, ຄະດີຂໍ້ທີສອງ, ຄະດີຂໍ້ທີສາມ, ຄະດີຂໍ້ທີສີ່; ປະຫວ່າງລະຫວ່າງຄະດີໄວ້ສຳລັບໃຫ້ນັກຮຽນຂຽນ.

8. ຂໍໃຫ້ຜູ້ນຶ່ງອ່ານ ໂຮເຊອາ 4:1. ອ່ານຄະດີຂໍ້ທີນຶ່ງ ແລະອະທິບາຍໂດຍໃຊ້ບົດຮຽນຊ່ວຍ. ບອກໃຫ້ຮູ້ວ່າແມ່ນຫຍັງທີ່ອິສຣາເອັນເຮັດຜິດ.

9. ຄຳຖາມສຳລັບນັກຮຽນ: ທ່ານຄິດວ່າຄົນສ່ວນຫລາຍມາໂບດເພື່ອສັງຄົມ ແທນທີ່ຈະມານະມັສການພຣະເຈົ້າບໍ່? ທ່ານຄິດວ່າຈຸດປະສົງຂອງການມາໂບດແມ່ນຫຍັງແທ້? ທ່ານໄດ້ເຫັນຫລັກຖານອັນໃດແດ່ທີ່ບອກເຖິງການບໍ່ສັດຊື່ຕໍ່ພຣະເຈົ້າໃນສມັຍນີ້? ທ່ານຄິດວ່າຄົນສ່ວນຫລາຍໄປໂບດເພື່ອສັງຄົມແລະການບັນເທີງ ຫລາຍກວ່າການໄປນະມັສການພຣະເຈົ້າບໍ່?

10. ໃຫ້ນັກຮຽນຄົນນຶ່ງອ່ານ 4:2 ແລະອ່ານຄະດີຂໍ້ທີສອງ. ອະທິບາຍຄະດີນີ້ໂດຍໃຊ້ບົດຮຽນຊ່ວຍ. ຄຳຖາມ: ພຣະເຈົ້າຕໍ່ວ່າກັບຊົນຊາດອິສຣາເອັນແນວໃດແດ່? ສິ່ງເຫລົ່ານີ້ມີບໍ່ໃນຄຣິສຕະຈັກປັດຈຸບັນ? ທ່ານໄດ້ເຮັດຜິດຕໍ່ພຣະບັນຍັດຂອງພຣະເຈົ້າບໍ່?

11. ອ່ານ 4:3 ແລະອ່ານຄຳກ່າວຫາຂອງພຣະເຈົ້າຂໍ້ທີສາມສຳລັບອິສຣາເອັນ. ອະທິບາຍຄະດີຂໍ້ນີ້ໂດຍໃຊ້ບົດຮຽນຊ່ວຍ. ຄຳຖາມ: ຄຣິສຕະຈັກຄວນພົວພັນກັບສັງຄົມຫລາຍປານໃດເພື່ອຮັກສາທັມຊາດ? ຄຣິສຕະຈັກຄວນສອນເດັກນ້ອຍແລະເຍົາວະຊົນໃຫ້ຮັກແລະສງວນທັມຊາດທີ່ພຣະເຈົ້າໄດ້ຊົງສ້າງໄວ້ບໍ່? ພວກຜູ້ໃຫຍ່ຄວນເປັນຕົວຢ່າງໃນເຣື່ອງນີ້ບໍ່?

12. ໃຫ້ນັກຮຽນຄົນນຶ່ງອ່ານ 4:4-12 ແລ້ວອະທິບາຍຄະດີຂໍ້ທີສີ່ໂດຍໃຊ້ບົດຮຽນຊ່ວຍ. ເຕືອນທຸກຄົນວ່າ ພວກຜູ້ນຳສາສນາໃນສມັຍນັ້ນພາກັນສໍ້ໂກງ, ບິດເບືອນຄວາມຈິງ, ບໍ່ສັດຊື່ຕໍ່ພຣະເຈົ້າ, ແລະອວງໂຕເປັນນັກສາສນາ. ອ່ານຄຳຖາມຂໍ້ທີ 4 ໃນທ້າຍບົດຮຽນ.

13. ຈາກພຣະທັມຂໍ້ 8:1-10, 14, ຂຽນຄຳເຕືອນຂອງພຣະເຈົ້າໃສ່ກະດານ. ບອກໃຫ້ທຸກຄົນຮູ້ວ່າ ຖ້າອິສຣາເອັນບໍ່ປ່ຽນທິດທາງພວກເຂົາກໍຈະໄດ້ຮັບຄວາມພິນາດ.

<u>ນຳບົດຮຽນໄປໃຊ້ກັບຊີວິດ (ໃຊ້ເວລາ 15 ນາທີ)</u>

14. ຕັ້ງຄຳຖາມສຳລັບນັກຮຽນໂດຍໃຊ້ຄຳຖາມຂໍ້ 5 ແລະຂໍ້ 2 ຊຶ່ງມີຢູ່ໃນບົດຮຽນ.

# ຄໍາແນະນໍາສໍາລັບຄຣູສອນ
# ບົດຮຽນທີ 9
# ຄວາມຮັກຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຮເຊອາ 11:1-11

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ໂຮເຊອາ 9:1--11:11

**ຈຸດສໍາຄັນຂອງບົດຮຽນນີ້:** ເຖິງພວກເຂົາຈະເຮັດຄວາມຜິດບາບຕໍ່ພຣະອົງ, ພຣະເຈົ້າກໍບໍ່ໄດ້ປະຖິ້ມໄພ່ພົນຂອງພຣະອົງ ແລະພຣະອົງຕຽມພ້ອມທີ່ຈະສະແດງຄວາມເມຕຕາກັບພວກເຂົາ.

**ຄໍາຖາມເພື່ອການສໍາຣວດ:** ເວລາພວກເຮົາເຮັດຄວາມຜິດບາບ, ພຣະເຈົ້າຕ້ອງການຢາກໄດ້ພວກເຮົາຄືນບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮຽນຮູ້ວ່າພຣະເຈົ້າບໍ່ໄດ້ປະຖິ້ມຊາວອິສຣາເອັນ ເຖິງພວກເຂົາຈະເຮັດບາບຕໍ່ພຣະອົງ.

## ແຜນສໍາລັບການສອນ

### ນໍາເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຂຽນຂໍ້ຄວາມນີ້ໃສ່ກະດານ: ຄວາມຮັກໝາຍຄວາມວ່າທ່ານຈະບໍ່ກ່າວຄໍາວ່າຕົວເອງເສັຽໃຈ ຫລືຂໍໂທດ. ຄໍາຖາມສໍາລັບນັກຮຽນ: ທ່ານເຫັນພ້ອມກັບຂໍ້ຄວາມນີ້ ຫລືບໍ່? ຖ້າເຫັນພ້ອມຫລືວ່າບໍ່ເຫັນພ້ອມກະຣຸນາໃຫ້ເຫດຜົນໄດ້ບໍ່?

2. ສົນທະນາຕໍ່ໄປໂດຍໃຊ້ຄໍາຖາມນີ້: ພວກເຮົາຈະມີທ່າທີແນວໃດກັບຄົນທີ່ປະຕິເສດຄວາມຮັກຂອງພວກເຮົາ? ເຕືອນນັກຮຽນວ່າໃນມື້ນີ້ພວກເຂົາເຈົ້າຈະໄດ້ຮຽນຮູ້ວ່າພຣະເຈົ້າບໍ່ໄດ້ຊົງທໍ້ຖອຍ ເຖິງຊົນຊາດອິສຣາເອັນຈະປະຕິເສດພຣະອົງຫລາຍເທົ່າໃດກໍຕາມ?

### ນໍາພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ເບິ່ງຫົວຂໍ້ທີນຶ່ງ: "ຄວາມຜິດບາບຈະຕິດຕາມພວກເຈົ້າ" (9:1--10:15). ສລຸບການລົງໂທດທຸກຢ່າງທີ່ອິສຣາເອັນໄດ້ຮັບເພາະການບໍ່ເຊື່ອຟັງ. ຂໍ້ເນັ້ນ: ໂຮເຊອາປະກາດພຣະທັມຂອງພຣະເຈົ້າແລະເອີ້ນອິສຣາເອັນໃຫ້ກັບຄືນມາຫາພຣະອົງ; ອິສຣາເອນປະຕິເສດພຣະເຈົ້າໂດຍປະຕິເສດຜູ້ປະກາດພຣະທັມ.

4. ເບິ່ງຫົວຂໍ້ທີສອງ: "ຄວາມຊົງຈໍາຂອງພໍ່ແມ່" (11:1-4). ໃຫ້ນັກຮຽນບາງຄົນເລົ່າເຣື່ອງຄວາມຊົງຈໍາທີ່ມ່ວນຊື່ນຫລາຍໃນຊີວິດຂອງຕົນຕອນຍັງເປັນເດັກນ້ອຽ ຫລືເລົ່າເຣື່ອງພໍ່ແມ່. ທຸກຄົນຄວນຮັບຮູ້ວ່າບໍ່ແມ່ນຄວາມຊົງຈໍາຂອງທຸກຄົນຈະເຕັມໄປດ້ວຍຄວາມສນຸກສຸກສໍາຣານ ເພາະຊີວິດຂອງບາງຄົນອາດຈະເຕັມໄປດ້ວຍຄວາມຂົມຂື່ນ. ໃຫ້ຄົນນຶ່ງເລົ່າເຣື່ອງປະສົບການທີ່ເກີດຂຶ້ນເມື່ອເຂົາຮູ້ວ່າຕົນເອງບໍ່ໄດ້ຢູ່ໃນພຣະປະສົງຂອງພຣະເຈົ້າ. ຄໍາຖາມ: ທ່ານຈະຮູ້ໄດ້ແນວໃດວ່າທ່ານບໍ່ໄດ້ຢູ່ໃນພຣະປະສົງຂອງພຣະເຈົ້າ? ເວລານັ້ນທ່ານຈະຕອບພຣະເຈົ້າແນວໃດ?

5. ສລຸບຄໍາອະທິບາຍສໍາລັບພຣະທັມຂໍ້ 1-4 ຊຶ່ງບອກເຖິງຄວາມຊົງຈໍາຂອງພຣະເຈົ້າ ແລະການຕອບສນອງຂອງອິສຣາເອັນຕໍ່ຄວາມຮັກຂອງພຣະອົງ.

6. ເບິ່ງຫົວຂໍ້ທີສາມ: "ຄວາມເຫລືອໃຈຂອງພໍ່ແມ່" (11:5-7). ຄຳຖາມ: ທ່ານຄິດວ່າເວລາໃດທີ່ພໍ່ແມ່ຄວນບອກວ່າ "ພໍແລ້ວ"? ຫລັງຈາກນັ້ນເພິ່ນຄວນເຮັດຫຍັງ? ແມ່ນຫຍັງທີ່ເຮັດໃຫ້ພຣະເຈົ້າບອກວ່າ "ພໍແລ້ວ" ກັບຊົນຊາດອິສຣາເອັນ? ທົບທວນເບິ່ງຂໍ້ 5-7, ໂດຍສເພາະຂໍ້ 7.

7. ເບິ່ງຫົວຂໍ້ທີສີ່: "ຄວາມຮັກຂອງພຣະເຈົ້າ" (11:8-9). ໃຫ້ທຸກຄົນອ່ານຂໍ້ 8-9 ແລ້ວໃຫ້ສລຸບຕາມຄວາມເຂົ້າໃຈຂອງໃຜລາວ, ສົມມຸດວ່າເຂົາເຈົ້າກຳລັງເວົ້າກັບລູກຜູ້ທີ່ບໍ່ເຊື່ອຟັງ. ໃຫ້ເວລາຕອບ. ເນັ້ນ: ພຣະທັມສອງຂໍ້ນີ້ເປີດເຜີຍເຖິງຄຸນພຣະລັກສະນະ (ຄວາມຮັກ) ຂອງພຣະຜູ້ເປັນເຈົ້າ.

8. ໃຊ້ບົດຮຽນເພື່ອພິຈາຣະນາເບິ່ງຄຳຖແລງ 3 ຂໍ້ຂອງພຣະເຈົ້າຊຶ່ງມີຢູ່ໃນພຣະທັມຂໍ້ 9.

9. ເບິ່ງຫົວຂໍ້ທີຫ້າ: "ການກັບຄືນບ້ານເກົ່າ" (11:10-11). ເບິ່ງຄວາມແຕກຕ່າງລະຫວ່າງການທໍຣະຍົດແລະການກັບຄືນບ້ານທີ່ມີຢູ່ໃນພຣະທັມຕອນນີ້ ໂດຍໃຊ້ບົດຮຽນຊ່ວຍ.

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. ທົບທວນເບິ່ງຂໍ້ຄວາມຢູ່ໃນ "ຄວາມໝາຍສຳລັບພວກເຮົາ" ໃນບົດຮຽນນີ້.

11. ໃຊ້ຄຳຖາມຂໍ້ 1 ແລະຕິດຕາມດ້ວຍຂໍ້ 5 ເພື່ອການສລຸບ. ຊັກຊວນນັກຮຽນໃຫ້ພິຈາຣະນາວ່າພວກເຂົາເຈົ້າຈະຕອບຄຳຖາມເຫລົ່ານີ້ແນວໃດແດ່ໃນອາທິດນີ້.

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 10
## ຈົ່ງກັບຄືນມາຫາພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຮເຊອາ 14
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ໂຮເຊອາ 11:12--14:9
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງປະທານຊີວິດໃໝ່ໃຫ້ແກ່ຜູ້ທີ່ກັບຄືນມາຫາພຣະອົງ.

**ຄຳຖາມເພື່ອການສຳຣວດ:** ເຮົາຈະມີຄວາມຫວັງອັນໃດ ຖ້າຄຳພິພາກສາບອກວ່າ "ຜິດຕາມຂໍ້ກ່າວຫາທຸກຢ່າງ?"
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮຽນຮູ້ວິທີທີ່ຈະຕອບຮັບຄຳເຊີນຂອງພຣະເຈົ້າໃຫ້ກັບຄືນມາຫາພຣະອົງ.

### ແຜນສຳລັບການສອນ

**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ໃຫ້ເອົາວັຈນານຸກົມ (ອັງກິດ/ລາວ) ນຶ່ງເຫລັ້ມມາຕຣຽມໄວ້ໃນຫ້ອງຮຽນ. ກ່ອນຈະເລີ້ມໃຫ້ຖາມນັກຮຽນວ່າ: ພວກເຮົາໝາຍເຖິງຫຍັງເວລາເຮົາເວົ້າວ່າ "ພວກເຮົາຈະມີການຟື້ນຟູຢູ່ໂບດ"? ຂໍໃຫ້ຜູ້ນຶ່ງເປີດວັຈນານຸກົມແລະຊອກຫາຄວາມໝາຍຂອງຄຳວ່າ "ການຟື້ນຄືນໃໝ່" (Revival).

2. ໃຫ້ນັກຮຽນອີກຄົນນຶ່ງຊອກຫາຄຳວ່າ "ການກັບໃຈ" (Repentance) ໃນວັຈນານຸກົມແລ້ວອ່ານຄວາມໝາຍຂອງຄຳນີ້. ແນະນຳຫົວຂໍ້ບົດຮຽນ ແລະເວົ້າເຖິງຄວາມສຳຄັນຂອງການສາມາດເຂົ້າໃຈສັນຍາລັກຂອງການຟື້ນຄືນໃໝ່ທາງຈິດວິນຍານ. ການຟື້ນຄືນໃໝ່ ແລະການກັບໃຈເປັນບໍ່ເກີດຂອງຄວາມປ່ຽນແປງ.

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

3. ໃຫ້ນັກຮຽນຄົນນຶ່ງອ່ານ ໂຮເຊອາ 11:12--12:14. ເຊີນທຸກຄົນໃຫ້ຟັງເບິ່ງຄຳເຕືອນຂອງພຣະເຈົ້າສຳລັບອິສຣາເອນເຣື່ອງການໄປຜິດທາງ. ໃຫ້ຂຽນຄຳເຕືອນຊຶ່ງແຕ່ລະຄົນສັງເກດເຫັນໃສ່ກະດານໄວ້.

4. ໃຫ້ນັກຮຽນຄົນນຶ່ງອ່ານ ໂຮເຊອາ 13. ເຊີນນັກຮຽນທັງໝົດໃຫ້ຟັງເບິ່ງຄຳເຕືອນຂອງພຣະເຈົ້າ. ໃຫ້ຂຽນຄຳເຕືອນຊຶ່ງແຕ່ລະຄົນສັງເກດເຫັນໃສ່ກະດານໄວ້.

5. ອ່ານຄຳຖາມຂໍ້ທີນຶ່ງ ຈາກຄຳຖາມໃນບົດຮຽນນີ້. ທ່ານເຫັນປ້າຍເຕືອນໃນສມັຍຜູ້ປະກາດພຣະທັມໂຮເຊອາ ຢູ່ໃນສມັຍປັດຈຸບັນນີ້ບໍ່? ທ່ານເຫັນອັນໃດ? ຄຳຖາມ: ທ່ານຄິດວ່າພວກເຮົາໃນສມັຍນີ້ອ່ານຄຳເຕືອນຂອງພຣະເຈົ້າໄດ້ດີກວ່າຄົນສມັຍຂອງໂຮເຊອາບໍ່? ຖ້າຄຳຕອບແມ່ນ: ດີກ່ອນ--ໃຫ້ຖາມຕໍ່ວ່າ ດີກວ່າແນວໃດ? ຖ້າຄຳຕອບວ່າບໍ່ດີເທົ່າເຂົາ-- ໃຫ້ຖາມຕໍ່ວ່າ: ເປັນຫຍັງພວກເຮົາຈຶ່ງວ່າບໍ່ດີເທົ່າພວກເຂົາ?

6. ຖາມນັກຮຽນຕໍ່ໄປ: ຈາກປ້າຍເຕືອນທັງໝົດ, ອິສຣາເອັນຄວນເຮັດແນວໃດ? (ກັບໃຈ, ຮັບການປິ່ນປົວ, ຮັບການ

ຟື້ນຟູ, ແລະຕໍ່ໆໄປ). ອ່ານ 14:1. ຊີ້ໃຫ້ນັກຮຽນເຫັນວ່າ ພຣະເຈົ້າຊົງປະສົງໃຫ້ອິສຣາເອັນໄດ້ກັບຄືນມາຫາພຣະອົງ, ກັບໃຈ, ແລະຮັບເອົາຄວາມສຳພັນກັບພຣະອົງຄືນອີກໃໝ່.

7. ໃຫ້ນັກຮຽນຄົນນຶ່ງແບ່ງປັນປະສົບການສ່ວນຕົວເຣື່ອງການກັບໃຈໃຫ້ນັກຮຽນທັງໝົດຟັງ.

8. ອ່ານ 14:2-3. ຄຳຖາມ: ມີຫຍັງແດ່ທີ່ຈຳເປັນສຳລັບການກັບໃຈທີ່ແທ້ຈິງ? ພາຍໃຕ້ຫົວຂໍ້ "ການກັບຄືນແລະການສາຣະພາບ," ແມ່ນຫຍັງຄືການທົດລອງທີ່ຮ້າຍແຮງທີ່ສຸດໃນສມັຍນີ້? ຄຳຖາມ: ຄົນໃນສມັຍນີ້ພຍາຍາມເຮັດຫຍັງແທນທີ່ຈະກັບໃຈ? ທ່ານຈົດຈຳຄຳສາຣະພາບກັບໃຈຂອງທ່ານຕໍ່ພຣະເຈົ້າໃນຄັ້ງລ້າສຸດບໍ່?

9. ອ່ານ 14:4-7. ຄຳຖາມ: ທ່ານໄດ້ຍິນຄຳເວົ້າຄຳໃດແດ່ທີ່ເປີດເຜີຍເຖິງຄວາມຮັກຂອງພຣະເຈົ້າຕໍ່ໄພ່ພົນຂອງພຣະອົງ? ອ້າງອີງໃສ່ຄວາມຈິງທີ່ວ່າ ພຣະເຈົ້າເປັນແພດຜູ້ປະເສີດ, ພຣະເຈົ້າເປັນຄວາມຮັກ, ແລະພຣະເຈົ້າເປັນຜູ້ປະທານ ຊີວິດ. ເບິ່ງຫົວຂໍ້ "ຜົນຂອງການກັບໃຈ" (14:4-5) ໃນບົດຮຽນ.

10. ອ່ານ 14:8-9. ຄຳຖາມ: ພວກເຮົາຈະມີປະສົບການເຣື່ອງການຟື້ນຟູໃນຊີວິດຂອງພວກເຮົາໄດ້ແນວໃດ?

## ນຳບົດຮຽນໄປໃຊ້ກັບຊີວິດ (ໃຊ້ເວລາ 15 ນາທີ)

11. ຄຳຖາມ: ມີປ້າຍເຕືອນແນວໃດແດ່ທີ່ພວກເຮົາຄວນເອົາໃຈໃສ່ໃນສມັຍນີ້?

12. ຊັກຊວນນັກຮຽນແຕ່ລະຄົນໃຫ້ສຳຣວດເບິ່ງຊີວິດຂອງຕົວເອງ, ໃຫ້ສັງເກດເບິ່ງປ້າຍເຕືອນຕ່າງໆໃນຊີວິດ, ແລ້ວໃຫ້ພາກັນແກ້ໄຂໂດຍການກັບໃຈ.

13. ປິດການສຶກສາພຣະທັມດ້ວຍການອະທິຖານ, ແນະນຳນັກຮຽນແຕ່ລະຄົນໃຫ້ອ້ອນວອນຢ່າງງຽບໆເພື່ອຂໍພຣະເຈົ້າໃຫ້ສົ່ງການຟື້ນຟູ ແລະການກັບໃຈ ມາຍັງຊີວິດຂອງພວກເຂົາ.

## ຄຳແນະນຳຄຣູສອນ

## ບົດຮຽນທີ 11

## ຄວາມໂລບມາກນຳພາເຖິງການລົງໂທດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມີກາ 1:1-16; ໒:1-9

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມີກາ 1--໒

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ທຸກຄົນເຂົ້າໃຈວ່າພຣະເຈົ້າຊົງລົງໂທດຄົນກົດຂີ່ຍ້ອນຄວາມຢາກໄດ້.

**ຄຳຖາມເພື່ອການສຳຣວດ:** ໃນຊີວິດຂອງທ່ານຢາກໄດ້ຫຍັງຫລາຍກວ່າໝູ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊີ້ໃຫ້ເຫັນວ່າພຣະເຈົ້າຊົງລົງໂທດຜູ້ໂລບມາກ ແລະຊ່ອຍຜູ້ຟັງຄວາມ.

## ບົດນຳ

ຄຣູສອນພຣະທັມພຣະເຈົ້າເປັນຜູ້ທີ່ພຣະເຈົ້າຊົງເລືອກ ໂດຍການເຫັນພ້ອມຂອງຄຣິສຕະຈັກທີ່ທ່ານຮັບໃຊ້ຢູ່. ດັ່ງນັ້ນທ່ານຈຶ່ງກາຍເປັນຄົນສຳຄັນຜູ້ນຶ່ງໃນຣາຊແຜ່ນດິນຂອງພຣະເຈົ້າເພາະທ່ານເປັນຜູ້ປູພື້ນຖານແຫ່ງຄວາມເຊື່ອໃຫ້ແກ່ທຸກຄົນໃນຫ້ອງຮຽນຂອງທ່ານ. ຈົ່ງຮັບຮູ້ວ່າພຣະເຈົ້າຊົງເລືອກທ່ານທຳງານສຳຄັນນີ້ ດັ່ງນັ້ນຈົ່ງເຮັດພາຣະນີ້ດ້ວຍສຸດອົກສຸດໃຈ ໂດຍການສຶກສາເຂົ້າເຝົ້າພຣະເຈົ້າສ່ວນຕົວກ່ອນທີ່ຈະສອນພຣະທັມພຣະອົງ ຈາກນັ້ນທ່ານຄວນຈະຕຽມຕົວສອນໂດຍການຫາ້ງຫາອຸປະກອນການສອນ ແລະໄປເຖິງຫ້ອງຮຽນກ່ອນເວລາເພື່ອຕຽມໃນຖານະທີ່ເປັນຄຣູສອນທີ່ດີ.

## ແຜນສຳລັບການສອນ

1. ຈັດຕຽມຫາຮູບງາມອັນໃດອັນນຶ່ງ ເຊັ່ນຮູບຣົດໃຫມ່ຣາຄາແພງ, ຮູບເຮືອນຫລັງໃຫຍ່ງ ມາຕິດທີ່ຝາຫ້ອງຫລືກະດານ, ຫລືຫາກຫາຮູບເຫລົ່ານັ້ນບໍ່ໄດ້ ຈົ່ງຂຽນວ່າ "ຫວຍຣັຖບານ 50 ລ້ານໂດລາຈະອອກມື້ນີ້".

໒. ເມື່ອນັກຮຽນມາເຖິງແລ້ວຈົ່ງຖາມນັກຮຽນວ່າ "ທ່ານຄິດແນວໃດກັບຮູບທີ່ຕິດເທິງກະດານ?"

3. ບອກນັກຮຽນວ່າວັນນີ້ພວກເຮົາຈະຮຽນເຣື່ອງ <u>ຄວາມໂລບມາກນຳພາເຖິງການລົງໂທດ</u>

4. ຄຣູນຳພາການອ້ອນວອນເພື່ອການຊົງນຳໃນການສອນແລະການຮຽນ.

5. ຂໍໃຫ້ຜູ້ນຶ່ງອ່ານ ພຣະທັມມີກາ 1:1-7 ຊຶ່ງເປັນບົດຮຽນຂໍ້ທີນຶ່ງ. **<u>ຄຳທຳນວາຍຂອງມີກາ</u>**

6. ບອກນັກຮຽນວ່າ ພຣະເຈົ້າໃຊ້ຜູ້ທຳນວາຍມີກາໄປບອກເຂົາ ເພາະວ່າເຂົາພາກັນຂາບໄຫວ້ພຣະທຽມທີ່ເທິງພູສູງ ແລະການໂສເພນີທຣາບພຽງ.

   ຂໍ້ ໒. ມີກາເປັ່ງສຽງປະກາດເຕືອນໃຫ້ທຸກຄົນຟັງສິ່ງທີ່ເພິ່ນກຳລັງຈະກ່າວໃນພຣະນາມພຣະເຈົ້າ. ພຣະເຈົ້າຈະເປັນພະຍານຕໍ່ສູ້ທຸກຄົນທີ່ບໍ່ຟັງ ໝາຍຄວາມວ່າ ພຣະເຈົ້າຈະຈັດການກັບເຂົາເອງ ບໍ່ແມ່ນມີກາ.

ຂໍ້ 3. ພຣະເຈົ້າສະເດັດມາແຕ່ເບື້ອງເທິງມີຄວາມໝາຍວ່າ ທ່ານມີກາມາຕາງໜ້າພຣະເຈົ້າຈາກເບື້ອງເທິງ.

ຂໍ້ 4-7. ພູທັງຫລາຍຈະເປື່ອຍ ໝາຍຄວາມວ່າ ພຣະພິໂຣດແລະຣິດອຳນາດຂອງພຣະອົງ. ພູສູງບ່ອນທີ່ເຂົາຖືວ່າສັກສິດ ຊຶ່ງເປັນບ່ອນຂາບໄຫວ້ພຣະທຽມ ຣວມທັງພຣະທຽມກໍຈະຖືກທຳລາຍ ແລະບໍ່ມີສິ່ງໃດຍັບຍັ້ງພຣະອົງໄດ້ ແມ່ນແຕ່ພຣະທຽມກໍຂັດຕໍ່ພຣະພິໂຣດບໍ່ໄດ້.

7. ຖາມນັກຮຽນ ເປັນຫຍັງພຣະເຈົ້າຈຶ່ງຈະທຳລາຍປະຊາຊົນເຫລົ່ານີ້? ທ່ານຄິດວ່າຍຸຕິທັມບໍ່ທີ່ພຣະອົງໃຊ້ໃຫ້ມີກາມາເຕືອນກ່ອນຈະທຳລາຍຫາກບໍ່ປ່ຽນໃຈ? ເປັນຫຍັງທ່ານມີກາຈຶ່ງເສົ້າໃຈ? ທ່ານມີຄວາມຄິດຄ້າຍຄືມີກາບໍ່?

8. ຂໍໃຫ້ຜູ້ນຶ່ງອ່ານ ມີກາ 1:8-16 ເປັນບົດຮຽນຫົວຂໍ້ທີສອງ <u>ຊີວິດລົງໂທດຢູດາ</u>

ຂໍ້ 8-9 ມີກາສະແດງຄວາມເສັຽໃຈທີ່ຈະເຫັນປະຊົນຂອງທ່ານຖືກລົງໂທດຍ້ອນບໍ່ຟັງຄວາມ.

ຂໍ້ 10-16 ການລົງໂທດຍ້ອນຄວາມໂລບມາກຂອງປະຊາຊົນ, ສ່ວນກະສັດຂອງອິສຣາເອນກໍຈະໄດ້ເອົາຕົວລອດໄປລີ້ຢູ່ຖ້ຳອາລຸນລັມ (ເປັນຖ້ຳທີ່ກະສັດດາວິດໜີຈາກຊາອູນ)

9. ຂໍໃຫ້ຜູ້ນຶ່ງອ່ານ (ມີກາ 2:1-5) ເປັນບົດຮຽນວັກທີສາມ <u>ຫ້ຽມໂຫດຍິ່ງກວ່າໂຈນ</u>

ຂໍ້ 1-2 ຄົນທີ່ນອນວາງແຜນການຮ້າຍໃນເວລາກາງຄືນແລະເຮັດການຊົ່ວໃນເວລາກາງວັນນັ້ນຮ້າຍໄປກວ່າໂຈນຂີ້ລັກ ເພາະວ່າໂຈນຂີ້ລັກນັ້ນເດີນຜ່ານກາຍໄປກາງເວັນເພື່ອສັງເກດການ ແລະເຂົາກໍຈະໄປລັກໃນເວລາກາງຄືນ. ສ່ວນຜູ້ທີ່ພຣະຄັມພີໄດ້ເວົ້ານີ້ແມ່ນເອົາເຂົ້າຂອງເງິນທອງຂອງປະຊາຊົນຕໍ່ໜ້າຕໍ່ຕາໂດຍເຈົ້າຂອງສິ່ງຂອງນັ້ນບໍ່ສາມາດອອກປາກຫຍັງໄດ້ເລີຍເພາະເພິ່ນໃຊ້ອຳນາດ.

ຂໍ້ 3-5 ແມ່ນບາບກັມຕາມສນອງທີ່ພຣະເຈົ້າກຳນົດໃຫ້ຄົນຊົ່ວຮ້າຍກວ່າໂຈນ.

<u>ຄຳຖາມ:</u>

1. ຄົນຂາບໄຫວ້ພຣະທຽມມີຜົນສະທ້ອນແນວໃດ?

2. ພຣະເຈົ້າເຮັດຢ່າງໃດ ຕໍ່ພູສູງບ່ອນທີ່ເຂົາຖືວ່າສັກສິດ?

3. ພຣະທຽມທີ່ເຂົາຂາບໄຫວ້ພຣະເຈົ້າເຮັດຢ່າງໃດ? ພຣະທຽມອົງໃດແດ່ຕໍ່ສູ້ກັບພຣະເຈົ້າ?

4. ມີຫຍັງເກີດຂຶ້ນກັບຄົນໂລບຂອງຄົນອື່ນ?

## ຄຳແນະນຳຄູສອນ
## ບົດຮຽນທີ 12
## ນຳໄປໃນທາງຜິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມີກາ 3
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມີກາ 3
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ທຸກຄົນຮູ້ວ່າຜູ້ນຳສົມຄວນຈະນຳໄພ່ພົນຂອງພຣະເຈົ້າໄປທາງທີ່ຖືກ
**ຄຳຖາມເພື່ອການສຳຣວດ:** ທ່ານເປັນຜູ້ນຳແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຕັດສິນໃຈໃຫ້ກາຍເປັນຜູ້ນຳທີ່ເໝາະສົມກັບພຣະເຈົ້າຊົງເລືອກ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສີພຣະທັດຂອງພຣະອົງໃນລັກສະນະຄ້າຍຄືພຣະອົງ.
- ສົ່ງເສີມຄອມຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

## ແຜນສຳລັບການສອນ

ຄູສອນພຣະທັມພຣະເຈົ້າເປັນຄູທີ່ສຳຄັນກວ່າຄູໃດໆໃນໂລກ ເພາະຄູສອນພຣະທັມນີ້ສາມາດນຳຄົນທັງຫລາຍທີ່ເຂົ້າມາຮຽນລອດພົ້ນຈາກບຶງໄຟນາຮົກໄດ້. ດັ່ງນັ້ນຄູສອນພຣະທັມພຣະເຈົ້າຄວນເອົາໃຈໃສ່ເຂົ້າເຝົ້າພຣະເຈົ້າສ່ວນຕົວກ່ອນຈະສອນ. ຈາກນັ້ນຈຶ່ງອ່ານບົດຮຽນທີ່ຈະສອນ ແລະຈົ່ງເຂົ້າໃຈວ່າສິ່ງທີ່ທ່ານຕຽມຈະສອນນັ້ນແມ່ນອົງພຣະຜູ້ເປັນເຈົ້າໄດ້ໃຫ້ນິມິດທ່ານເໝືອນພຣະເຈົ້າໄດ້ໃຫ້ແກ່ມີກາ. ຈົ່ງເວົ້າທຸກຢ່າງທີ່ພຣະເຈົ້າຊົງກ່າວກັບທ່ານໃນບົດຮຽນວັນນີ້. ທຸກຄັ້ງທີ່ຂໍໃຫ້ນັກຮຽນອ່ານພຣະຄັມພີແລ້ວ ຄູຢ່າພະຍາຍາມອ່ານຄືນເພາະມັນເປັນການອ່ານລື້ມຄືນກິນເວລາໄປຊື່ໆ ອີກປະການນຶ່ງຜູ້ທີ່ອ່ານນັ້ນອາຈຈະຄິດນ້ອຍໃຈຄິດວ່າລາວເອງອ່ານບໍ່ດີ ຫລືຫາກທ່ານອ່ານອີກກໍຄ້າຍກັບວ່າທ່ານອ່ານໄດ້ດີກວ່າລາວອີກ. ດັ່ງນັ້ນຢ່າອ່ານລື້ມຄືນເລີຍ ໃຫ້ອາທິບາຍໄປຕາມນັ້ນກໍດີແລ້ວ.

1. ຂຽນໃສ່ກະດານວ່າ "ຈົ່ງຕາມຜູ້ນຳຂອງເຮົາ" ເມື່ອອ້ອນວອນແລ້ວຈົ່ງຖາມນັກຮຽນວ່າ ຜູ້ນຳທີ່ເຮົາຈະເດີນຕາມຕ້ອງເປັນຜູ້ນຳແນວໃດ?

2. ຖາມນັກຮຽນທ່ານຄິດວ່າພຣະເຈົ້າຢາກໃຫ້ເຮົາເປັນຜູ້ນຳບໍ່? ແລະຄິດວ່າເພິ່ນຢາກໃຫ້ເຮົາເປັນຜູ້ນຳສນິດໃດ?
3. ເລົ່າເຣື່ອງຄົນດຳຂ້າທາດໃນບົດຮຽນໃຫ້ນັກຮຽນຟັງ. (ຢ່າພະຍາຍາມອ່ານ ແຕ່ໃຫ້ເລົ່າໃຫ້ຟັງ) ຫລັງຈາກເລົ່າຈົບແລ້ວບອກນັກຮຽນວ່າ ພວກຜູ້ປະກາດພຣະທັມໄດ້ໃຊ້ພຣະທັມບາງຕອນເພື່ອຂົ່ມຂູ່ຂ້າທາດ.

4. ຂໍໃຫ້ຜູ້ນຶ່ງອ່ານ ພຣະທັມມີກາ 3: 1-4 <u>ນາຍປົກຄອງແບບຂົ່ມເຫັງຂ້າທາດ</u> ບົດຮຽນວັກທີ 1.
ຫລັງຈາກອ່ານແລ້ວຖາມນັກຮຽນວ່າ "ມີກາເວົ້າກັບໃຜ?"

5. ມີກາກ່າວວ່າ *ພວກເຈົ້າກັດກິນເນື້ອ ແລະລອກໜັງຂອງພວກເຂົາອອກທັກກະດູກຂອງພວກເຂົາ ແລະຕັດໃຫ້ເປັນຕ່ອນໆເຫມືອນຊີ້ນຢູ່ໃນຫມໍ້* (ຂໍ້ 3) ທ່ານເຂົ້າໃຈແນວໃດ? ໃຫ້ເວລານັກຮຽນຕອບເລັກນ້ອຍແລ້ວຈຶ່ງບອກນັກຮຽນວ່າ "ມີກາປຽບທຽບວ່າ ກັດກິນເນື້ອ ແລະລອກໜັງຂອງພວກ ເຂົາອອກທັກກະດູກຂອງພວກເຂົາ ແລະຕັດໃຫ້ເປັນຕ່ອນໆເຫມືອນຊີ້ນຢູ່ໃນຫມໍ້ ເພາະວ່າຊີ້ນທີ່ຢູ່ໃນຫມໍ້ບໍ່ສາມາດຫລີກລ້ຽງຈາກປາກຂອງຜູ້ທີ່ຈະກິນຊີ້ນຕ່ອນນັ້ນ.

6. ຄຣິສຕຽນເຮົາຄວນຮຽນຮູ້ເມື່ອເປັນນາຍປົກຄອງກໍຢ່າເຮັດຄືນາຍພວກນີ້ ຫລືຫາກໄດ້ເຮັດກໍຈົ່ງເຊົາແຕ່ວັນນີ້ເລີຽ.

7. ຂໍ້ 4 ຄຣິສຕຽນເຮົາເຮັດຫຍັງພຣະເຈົ້າຈຶ່ງບໍ່ຕອບແລະບໍ່ຟັງຄຳອາທິຖານ? ໃຫ້ນັກຮຽນອອກຄຳເຫັນ ແລ້ວອ່ານ
ຂໍ້ 4 ໃຫ້ນັກຮຽນຟັງ.

8. ຂໍໃຫ້ຜູ້ນຶ່ງອ່ານ ມີກາ 3: 5-8 <u>ປະໃຫ້ເຂົາຢູ່ໃນຄວາມມືດ</u> ບົດຮຽນວັກທີ 2
ຖາມນັກຮຽນວ່າ "ທ່ານມີກາເປັນແນວໃດ?" ຢາກໃຫ້ອາຈານເຮົາເປັນຄືເພິ່ນບໍ່? ເຮົາຈະບໍ່ຄຽດບໍ່ຫາກອາຈານເຮົາເປັນຄືມີກາ? ຢ່າລືມວ່າທຸກວັນນີ້ອາຈານພວກເຮົາບໍ່ຮຸນແຮງຄືມີກາຫລາຍຄົນກໍຄຽດຢູ່ແລ້ວ.

9. ທ່ານຢາກເປັນຄືມີກາບໍ່? ເຮົາຈົ່ງເຂົ້າໃຈວ່າເຮົາທັງຫລາຍເປັນຜູ້ຮັບໃຊ້ພຣະເຈົ້າຫມົດທຸກຄົນ

10. ໃຫ້ຜູ້ນຶ່ງອ່ານ ( 3: 9-12) <u>ນຳປະຊາຊົນໄປສູ່ທາງຫາຍຍະນະ</u> ບົດຮຽນວັກທີ 3.

11. ມີກາເຕືອນ
- ກ. ຜູ້ປົກຄອງບ້ານເມືອງທີ່ປ່ຽນຄວາມຊອບທັມມາເປັນອະທັມ.
- ຂ. ປະໂລຫິດໃຊ້ກົດຫມາຍ (ພຣະບັນຍັດ) ມາຂົ່ມຂູ່ປະຊາຊົນເພື່ອສິນຈ້າງຣາງວັນ.
- ຄ. ຜູ້ປະກາດພຣະທັມ ຖວາຍບູຊາດ້ວຍເຫັນແກ່ເງິນທີ່ເຂົາຈ້າງໃຫ້ຖວາຍ.

12. ສິ່ງທີ່ຮຽນຮູ້ໃນໂບດເວລານີ້ຄື;
1. ຜູ້ເປັນອາຈານຢ່າເຫັນແກ່ຫນ້າຜູ້ຖວາຍຫລາຍ ຫລືຫາກເທສນາຮຸນແຮງຢ້ານເສັຽລາວໄປທາງອື່ນ
2. ຜູ້ໃດຄິດວ່າຕົນເອງຖວາຍຫລາຍກໍຢ່າພະຍາມຍາມໃຊ້ອຳນາດໃນໂບດ ຫລືມັກຈະອອກສຽງແຮງເວລາປະຊຸມ.

<u>ຄຳຖາມ:</u>

1. ຜູ້ນຳພາໄປທາງຜິດເປັນຜູ້ນຳທີ່ພໍພຣະທັຍພຣະເຈົ້າຢ່າງໃດ? ຫາກທ່ານເປັນຜູ້ນຳທ່ານຈະນຳແນວໃດ?

2. ພຣະເຈົ້າເຮັດແນວໃດຕໍ່ຜູ້ນຳທີ່ນຳປະຊາຊົນອອກນອກທາງຂອງພຣະເຈົ້າ?

3. ຫາກທ່ານມີກາມາໂບດເຮົາມື້ນີ້ເພິ່ນຈະວ່າແນວໃດກັບເຮົາທັງຫລາຍ? ເພາະເຮົາເປັນຜູ້ນຳທຸກຄົນ.

4. ບົດຮຽນວັນນີ້ສອນຫຍັງທ່ານແດ່?

5. ເລີ່ມຈາກວັນນີ້ໄປທ່ານຈະປັບປຸງຕົນເອງໃຫ້ກາຍເປັນຜູ້ນຳທີ່ພຣະເຈົ້າພໍພຣະທັຍຢ່າງໃດ?

6. ຄຳແນະນຳໃຫ້ເປັນຜູ້ນຳທີ່ດີ:

ກ. ເລີ່ມຕື່ນແຕ່ເຊົ້າໃນວັນອາທິດ ເພື່ອອຸທິດຕົນເອງໃນການເຂົ້າເຝົ້າພຣະເຈົ້າສ່ວນຕົວ.

ຂ. ຕຽມພ້ອມຈະນະມັສການຮ່ວມກັບຄົນໃນໂບດ. ຟັງເທດສນາເພື່ອຕົນເອງ.

ຄ. ນຳພາຄອບຄົວໄປໂບດໃຫ້ທັນເວລາ.

ງ. ຮຽນຖວາຍສິບຮົດ ໂດຍບໍ່ໃຫ້ໃຜຮູ້.

7. ຄຣູນຳພາການອ້ອນວອນປິດໂດຍການຂອບພຣະຄຸນທີ່ໄດ້ຮັບບົດຮຽນຈາກມີກາ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# ສັນຕິສຸກທີ່ມາຈາກພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມີກາ 4:1-8; 5:2-5
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມີກາ 4--5
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ທຸກຄົນຮູ້ວ່າພຣະເຈົ້າເປັນຜູ້ໂຜດປະທານສັນຕິສຸກ.
**ຄຳຖາມເພື່ອການສຳຣວດ:** ສັນຕິສຸກມີແທ້ບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າສັນຕິສຸກທີ່ພຣະເຈົ້າໂປດປະທານນັ້ນຂ້າພະເຈົ້າຈຳຕ້ອງວາງໃຈໃນພຣະອົງກ່ອນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສີພຣະທັດຂອງພຣະອົງໃນລັກສະນະຄ້າຍຄືພຣະອົງ.
- ສົ່ງເສີມຄອມຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

**ແຜນສຳລັບການສອນ**

1. ຊອກຫາໜັງສືພິມ ເຣື່ອງການຜິດຖຽງຂັດແຍ່ງກັນຣະຫວ່າງປະເທດ, ອົງການຕ່າງໆມາໃຫ້ນັກຮຽນເບິ່ງ. ອາທິບາຍ ເຣື່ອງການບໍ່ລົງລອຍກັນກ່ຽວກັບໜັງສືພິມໃຫ້ນັກຮຽນຟັງຕາມຄວາມເຂົ້າໃຈຂອງທ່ານ.

2. ຖາມນັກຮຽນຫາກໂລກນີ້ບໍ່ມີການຜິດຖຽງກັນ ໂລກຈະເປັນແນວໃດ? ໃຫ້ນັກຮຽນອອກຄຳເຫັນນ້ອຍນຶ່ງແລະຖາມຕໍ່ອີກວ່າ ຄວາມສງົບສຸກນັ້ນເປັນຮູບຢ່າງໃດ?

3. ອ່ານຈຸດປະສົງຄຳຄັນຂອງບົດຮຽນນີ້; *ພຣະເຈົ້າເປັນຜູ້ໂຜດປະທານສັນຕິສຸກ.* ແລະອ່ານຄຳນຳໃນບົດນີ້ໃຫ້ນັກຮຽນຟັງ.

4. ໃຫ້ຜູ້ນຶ່ງອ່ານ ມີກາ 4:1-8 ເປັນບົດຮຽນວັກທີ 1 (**ການຕັດສິນລົງໂທດບໍ່ແມ່ນສິ່ງທີ່ພຣະເຈົ້າພໍພຣະທັຍ**)
   ສລຸບເຣື່ອງຈາກພຣະທັມທີ່ອ່ານ
      ກ. ຄົນທັງຫລາຍຈະໄຫຼມາຫາພຣະເຈົ້າເໝືອນດັ່ງສາຍນ້ຳໄຫລມາເຕົ້າໂຮມກັນໃນບ່ອນດຽວ. (ຂໍ້ 1).

ຄ. ເຂົາມາເພື່ອນະມັສການ, ມາຟັງວ່າພຣະເຈົ້າຈະສັ່ງໃຫ້ເຮັດຫຍັງແດ່. (ຂໍ້ 2).

ງ. ຄົນທັງຫລາຍຈະເດີນຕາມທາງທີ່ພຣະເຈົ້າເລືອກໄວ້. (ຂໍ້ 2).

ຈ. ພຣະເຈົ້າຈະຊີ້ໄກ່ເກັ່ຽການຜິດຖຽງກັນໃນຣະຫວ່າງຊົນຊາດຕ່າງໆ. (ຂໍ້ 3).

ສ. ອາວຸດທີ່ມີຢູ່ຈະດັດແປງມາເປັນຫມາກສີບໄຖເພື່ອໄຖນາ. (ຂໍ້ 3).

ຊ. ທຸກຄົນຈະຢູ່ດ້ວຍກັນໃນຄວາມສງົບສຸກ. (ຂໍ້ 4).

ຍ. ນະມັສການດ້ວຍຄວາມເຊື່ອຟັງ. (ຂໍ້ 5).

ດ. ເມື່ອພຣະອົງສະເດັດມາແລ້ວຈະເຕົ້າໂຮມໄພ່ພົນຂອງພຣະອົງ (ຂໍ້ 6).

ຕ. ຈະຕັ້ງປະເທດຊາດໃຫ້ເຂົາອີກໃຫມ່. (ຂໍ້ 7).

ຖ. ເປັນປະເທດທີ່ພຣະເຈົ້າເຝົ້າເບິ່ງແຍງ. (ຂໍ້ 8).

5. ໃຫ້ຜູ້ນຶ່ງອ່ານ ມີກາ 4:9--5:1 ເປັນບົດຮຽນວັກທີ 2 (**<u>ການທຳນວາຍຕໍ່</u>** )

ກ. ພວກເຂົາຮ້ອງໄຫ້ສຽງດັງເພາະເຂົາປະຕິເສດພຣະເຈົ້າເປັນຜູ້ນຳເຂົາ( ຂໍ້ 9).

ຂ. ບໍ່ມີໃຜຊ່ອຍເຂົາໄດ້ນອກຈາກພຣະເຈົ້າຈະຊົດຊ່ອຍເຂົາໃຫ້ພົ້ນ (ຂໍ້ 10).

ຄ. ແຜນການຂອງພຣະເຈົ້າ. (ຂໍ້ 11-12).

ງ. ພຣະເຈົ້າຊົງໃຫ້ໄພ່ພົນຂອງພຣະອົງມີກຳລັງແລະອຳນາດ (ຂໍ້ 13).

6. ໃຫ້ຜູ້ນຶ່ງອ່ານ ມີກາ 5:2-5 ເປັນບົດຮຽນວັກທີ 3 (**<u>ມີກາທຳນວາຍການສະເດັດມາຂອງພຣະເຢຊູຄຣິດ</u>**)

ກ. ກະສັດເຊດິເຄັຽເປັນກະສັດອົງສຸດທ້າຍຂອງຢູດາໃນສມັຍເນບູກາເນັດຊາກະສັດບາບີໂລນໂຈມຕີ.
ໃນພຣະທັມປະຫວັດກະສັດ ທີສອງ 25:1-2

ຂ. ຜູ້ນຳອິສຣາເອນກໍຖືກສັດຕູຕີຫນ້າແລ້ວຫມາຍເຖີງກະສັດເຊເດກີຢາ. (ຂໍ້ 1).

ຄ. ມີກາທຳນວາຍເຖີງພຣະເຢຊູຄຣິດຜູ້ມາໂຜດອິສຣາເອນ ( ຂໍ້ 2-3).

ງ. ຈະປົກຄອງດ້ວຍອຳນາດຂອງພຣະເຈົ້າ (ບໍ່ແມ່ນອຳນາດເສິກສົງຄາມ) (ຂໍ້ 4).

ຈ. ປະຊາຊົນຂອງເພີ່ນຈະປອດພັຍ (ຂໍ້ 4).

ສ. ພຣະອົງເປັນຜູ້ນຳເອົາຄວາມສງົບສຸກມາສູ່ມະນຸດ (ຂໍ້ 5).

7. ສລຸບ:

ກ. ເລົ້າໂລມນັກຮຽນໃຫ້ເບິ່ງຊີວິດຂອງຕົນເອງແລະພິຈາຣະນາຫາວິທີທີ່ຈະຢູ່ດ້ວຍກັນໂດຍຄວາມສງົບສຸກ.

ຂ. ຫາກທ່ານສາມາດນຳຄວາມສງົບສຸກມາໂບດຈັກສອງຢ່າງທ່ານຈະນຳຄວາມສງົບອັນໃດແດ່?

ຄ. ຖາມນັກຮຽນມີໃຜບໍ່ຍອມໃຫ້ຕົນເອງເປັນຄວາມສງົບສຸກຂອງໂບດເຮົາ.

ງ. ຄຣູອ້ອນວອນປິດແລະອ້ອນວອນສຳລັບຄົນທີ່ຍອມເປັນຄວາມສງົບສຸກ.

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 14

# ພຣະເຈົ້າເອົາເລື່ອງອິສຣາເອນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມີກາ 6:1-8

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ມີກາ 6--7

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອຕອບພຣະຄຸນຂອງພຣະອົງເຮົາທັງຫລາຍຄວນຈະສະແດງຄວາມເມດຕາກະຣຸນນາແກ່ຜູ້ອື່ນ

**ຄຳຖາມເພື່ອການສຳຣວດ:** ພຣະເຈົ້າຫວັງສິ່ງໃດຈາກເຮົາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສັນຣະສູດຕົນເອງເປັນຄົນເມດຕາກະຣຸນນາແກ່ຜູ້ອື່ນ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສີພຣະທັດຂອງພຣະອົງໃນລັກສະນະຄ້າຍຄືພຣະອົງ.
- ສົ່ງເສີມຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

**ຄຳນຳ:** ຈົ່ງອ່ານບົດ 6:1 ໃຫ້ເຂົ້າໃຈກ່ອນຈະສອນເພາະໃນຂໍ້ນີ່ງນີ້ໃນພາສາລາວແມ່ນເຂົ້າໃຈຍາກ ດັ່ງນັ້ນຫາກທ່ານອ່ານແລະເຂົ້າໃຈພາສາອັງກິດໃຫ້ອ່ານອັງກິດສະບັບ NIV ແລ້ວທ່ານຈະເຂົ້າໃຈດີ. ສ່ວນທ່ານຜູ້ບໍ່ສາມາດອ່ານແລະເຂົ້າໃຈພາສາອັງກິດຂ້າພະເຈົ້າຂໍແນະນຳດັ່ງນີ້: ຜູ້ທຳນວາຍມີກາກ່າວກັບອິສຣາເອນວ່າ *ຈົ່ງຟັງສິ່ງທີ່ພຣະຜູ້ເປັນເຈົ້າຊົງກ່າວ* ຫລືພຣະຜູ້ເປັນເຈົ້າສັ່ງໃຫ້ຂ້າພະເຈົ້າມາເວົ້າກັບທ່ານວ່າ *ຈົ່ງລຸກຂຶ້ນຖແລງຄະດີຂອງເຈົ້າຕໍ່ພູເຂົາ ເພື່ອເປັນພະຍານ.*

## ແຜນສຳລັບການສອນ

1. ຂຽນໃສ່ກະດານ "ຄວາມຫວັງໄວ້" ເລີ້ມຕົ້ນດ້ວຍຄຳຖາມທ່ານຕັ້ງຄວາມຫວັງໄວ້ແນວໃດແດ່? ອາດຈະມີຄວາມຫວັງແຕກຕ່າງກັນ, ບາງຄົນອາດຈະຫວັງເມື່ອໃຫຍ່ຂຶ້ນມາຈະເປັນ........, ບາງຄົນຫາກລູກໃຫຍ່ແລ້ວຫວັງໃຫ້ລູກເປັນ....., ບາງຄົນຫວັງເວລາເຖົ້າມາຈະ........., ຫວັງໃຫ້ຄອບຄົວ..... ແລະອື່ນໆ. (ນີ້ແມ່ນຄວາມຫວັງມະນຸດ ສ່ວນພຣະເຈົ້າມີຄວາມຫວັງໃຫ້ມະນຸດເຮົາປະຕິບັດ ເຮົາຈະເວົ້າກັນໃນຕອນທ້າຍຂອງບົດຮຽນ.

2. ເມື່ອເຮົາຫວັງເຊັ່ນນັ້ນທ່ານພໍຈະຮູ້ບໍ່ວ່າພຣະເຈົ້າຫວັງຫຍັງຈາກເຮົາ? ໃຫ້ນັກຮຽນອອກຄຳເຫັນ ແລ້ວເລີ້ມຕົ້ນອ້ອມວອນເປີດສອນບົດຮຽນ.

3. ໃຫ້ຜູ້ນຶ່ງອ່ານ ມີກາ 6:1-5 <u>ຄ້າຍຄືຢູ່ຕໍ່ໜ້າສານ</u> ເປັນບົດຮຽນວັກທີ 1

- ແມ່ນໃຜເປັນຜູ້ເອົາເຣື່ອງອິສຣາເອນ? <u>ຕອບ:</u> ແມ່ນພຣະເຈົ້າ.
- ແມ່ນໃຜເປັນຄະນະຕຸລາການ? <u>ຕອບ</u>: ພູເຂົາທັມຊາດທີ່ພຣະເຈົ້າສ້າງ.
- ພຣະເຈົ້າໄດ້ຊ່ອຍໃຜອອກຈາກຂ້າທາດ <u>ຕອບ:</u> ອິສຣາເອນ
- ພຣະເຈົ້າຊົງຖາມວ່າ ເຮົາໄດ້ເຮັດຫຍັງແດ່ແກ່ເຈົ້າ? 1. ເປັນຄຳທວງໃຫ້ຣະນຶກ. 2. ຫລືເຮັດບໍ່ດີຢ່າງໃດ?
- ພຣະເຈົ້າໃຫ້ໂອກາດເຂົາຕອບ *ຈົ່ງຕອບເຮົາ ມາເບິ່ງດູ* (ຂໍ້ 3)

4. ແບ່ງນັກຮຽນເປັນ 2 ກຸ່ມ. ໃຫ້ກຸ່ມນຶ່ງເປັນອິສຣາເອນ ແລະກຸ່ມສອງເປັນຜູ້ທຳນວາຍມີກາ ແລະໃຫ້ທັງສອງກຸ່ມອ່ານ ມີກາ 6:1-5 ແລະໃຫ້ຊອກຫາຄຳຕອບນີ້:

- ພຣະເຈົ້າເອົາຫລັກຖານອັນໃດມາຕໍ່ສູ້ເພື່ອລົງໂທດອິສຣາເອນ?
- ພຣະອົງດຳເນີນຄະດີອິສຣາເອນຢ່າງໃດແດ່?
- ເຂົາເປັນຂ້ອຍຂ້າໃຜ?
- ແມ່ນໃຜວາງແຜນທຳລາຍເຂົາ?
- ພຣະເຈົ້າໄດ້ເຮັດຫລືຊ່ອຍເຂົາຢ່າງໃດ?
- ພຣະເຈົ້າໃຊ້ໃຜແດ່ໄປນຳເຂົາອອກມາ?
- ພວກອິສຣາເອນມີທ່າທີຮັບວ່າເຂົາຜິດບໍ່? <u>ຕອບ:</u> ເຂົາຍອມຮັບຜິດຫລັກຖານໃນຂໍ້ 8

5. ໃຫ້ເວລາກຸ່ມລະ 5 ນາທີ ລາຍງານການຄົ້ນຄວ້າຂອງເຂົາເຈົ້າ.

6. ຖາມນັກຮຽນ ພຣະເຈົ້າມີພຣະປະສົງອັນໃດຈຶ່ງກ່າວໃນຂໍ້ 5 ?

7. ຄຣູອ່ານ ມີກາ 6:6-7 <u>ປະຊາຊົນຂໍຕໍ່ລອງ</u>

- ຈະເຂົ້າມະມັສການ
- ຈະນຳເອົາສິ່ງຂອງມາຖວາຍ
    1. ແກະພັນໂຕ
    2. ນ້ຳມັນສົດທີ່ບໍ່ຫມົດຈັກເທື່ອ
- ເຂົາຂໍໃຫ້ມີກາໄປຕໍ່ລອງກັບພຣະເຈົ້າດ້ວຍເຄື່ອງຂອງເຫລົ່ານັ້ນ.

8. ໃຫ້ຜູ້ນຶ່ງອ່ານ 6: 8 <u>ຄຳຕອບຂອງພຣະເຈົ້າ</u> ບົດຮຽນວັນທີ 3

- ພຣະເຈົ້າບໍ່ສົນໃຈເຄື່ອງຂອງທີ່ເຂົານມາຕໍ່ລອງ.
- ພຣະປະສົງຂອງພຣະອົງໃຫ້ເຂົາປະຕິບັດຄື; (ຫລືຄວາມຫວັງຂອງພຣະເຈົ້າ)

1. ໃຫ້ກະທຳຄວາມຍຸຕິທຳ. (ໃຫ້ນັກຮຽນອາທິບາຍຄວາມຍຸຕິທັມເປັນແນວໃດ?). ແລ້ວຄຣູຈື່ງອ່ານຄວາມຍຸຕິທັມໃນບົດຮຽນໃຫ້ນັກຮຽນຟັງ.
2. ສະແດງຄວາມຮັກໝັ້ນຄົງ. (ຖາມນັກຮຽນພຣະອົງໝາຍເຖິງອັນໃດ?) . ແລ້ວຄຣູຈື່ງອ່ານຄວາມຍຸຕິທັມໃນບົດຮຽນໃຫ້ນັກຮຽນຟັງ.
3. ເຊື່ອຟັງພຣະຜູ້ເປັນເຈົ້າຂອງເຈົ້າຢ່າງອ່ອນນ້ອມ. (ແປວ່າຖ່ອມໃຈຟັງແລະປະຕິບັດຄຳສັ່ງສອນພຣະເຈົ້າທຸກຂໍ້ຄວາມ).

9. ສລຸບບົດຮຽນ ໂດຍເອົາຄຳຖາມໃນບົດຮຽນມາຖາມ ສະເພາະຢ່າງຍິ່ງແມ່ນຄຳຖາມທີ 7

10. ຄຣູຖາມນັກຮຽນ ບາງຄັ້ງທ່ານມີຊີວິດຜິດພາດຄ້າຍຄືອິສຣາເອນບໍ່? ອ້ອນວອນຂໍອະພັຍແລະຂໍໃຫ້ພຣະອົງຊົງສອນທຸກວັນເພື່ອຈະບໍ່ຫລົງລືມຄຳສອນຂອງພຣະອົງ.